United Nations
Educational, Scientific and
Cultural Organization

Japan
Funds-in-Trust

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ

## ວັດຖຸອຸປະກອນ

ປື້ມຄູ່ມື ກ່ຽວກັບການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ

4

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ
# ວັດຖຸອຸປະກອນ

ປຶ້ມຄູ່ມື ກ່ຽວກັບການສົ່ງເສີມການສຶກສາຮຽນຮ່ວມ

4

ໂດຍ: ອຽນ ກັບລານ (Ian Kaplan) ແລະ
ອິງກຣິດ ລີວິສ (Ingrid Lewis)

Published in 2014 by the United Nations Educational, Scientific and Cultural Organization
7, place de Fontenoy, 75352 Paris 07 SP, France

and

UNESCO Bangkok Office

© UNESCO 2014

ISBN 978-92-9223-487-4 (Print version)
ISBN 978-92-9223-488-1 (Electronic version)

This publication is available in Open Access under the Attribution-ShareAlike 3.0 IGO (CC-BY-SA 3.0 IGO) license (http://creativecommons.org/licenses/by-sa/3.0/igo/). By using the content of this publication, the users accept to be bound by the terms of use of the UNESCO Open Access Repository (http://www.unesco.org/open-access/terms-use-ccbysa-en).

The designations employed and the presentation of material throughout this publication do not imply the expression of any opinion whatsoever on the part of UNESCO concerning the legal status of any country, territory, city or area or of its authorities, or concerning the delimitation of its frontiers or boundaries.

The ideas and opinions expressed in this publication are those of the authors; they are not necessarily those of UNESCO and do not commit the Organization.

Open Access is not applicable to non-UNESCO copyright photos.

Copy-editing: Sandy Barron
Design/Layout: Warren Field

TH/APL/14/042-300

# ສາລະບານ


ພາກສະເໜີ ........................................................................................................ 1

ວັດຖຸອຸປະກອນການສ້າງຄູໝາຍເຖິງຫຍັງ? ........................................................ 1

ເປັນຫຍັງວັດຖຸອຸປະກອນການສ້າງຄູຈຶ່ງເປັນປະເດັນສຳຄັນສຳລັບການໂຄສະນາສິ່ງເສີມ?..... 2

ບັນຫາທ້າທາຍ 1: ວັດຖຸອຸປະກອນທີ່ເໝາະສົມ ........................................................ 2

ການວິເຄາະສະພາບການ ........................................................................... 2

ເປົ້າໝາຍຂອງການໂຄສະນາສິ່ງເສີມ ............................................................. 5

ບັນຫາທ້າທາຍ 2: ວັດຖຸອຸປະກອນທີ່ເນັ້ນໜັກໃສ່ພາກປະຕິບັດ .......................................... 7

ການວິເຄາະສະພາບການ ........................................................................... 7

ເປົ້າໝາຍຂອງການໂຄສະນາສິ່ງເສີມ ............................................................. 9

ບັນຫາທ້າທາຍ 3: ຄວາມຍືດຍຸ່ນໃນການສ້າງ ແລະ ການນຳໃຊ້ວັດຖຸອຸປະກອນ .................. 12

ການວິເຄາະສະພາບການ ........................................................................... 12

ເປົ້າໝາຍຂອງການໂຄສະນາສິ່ງເສີມ ............................................................. 13

ບັນຫາທ້າທາຍ 4: ການຫຼີກເວັ້ນ ວັດຖຸອຸປະກອນທີ່ບໍ່ແມ່ນການຮຽນຮ່ວມ ............................ 15

ການວິເຄາະສະພາບການ ........................................................................... 15

ເປົ້າໝາຍຂອງການໂຄສະນາສິ່ງເສີມ ............................................................. 19

ຈະຮູ້ໄດ້ແນວໃດວ່າວຽກງານໂຄສະນາສິ່ງເສີມນັ້ນມີຜົນກະທົບດ້ານບວກ ............................ 24

ເອກະສານຊ້ອນທ້າຍ ................................................................................ 26

# ພາກສະເໜີ

ປື້ມຄູ່ມືເພື່ອການໂຄສະນາສົ່ງເສີມສະບັບນີ້ ເຊິ່ງມີຫົວຂໍ້ ກ່ຽວກັບ *'ວັດຖຸອຸປະກອນ'* ເປັນສະບັບທີ 4 ຂອງຊຸດປື້ມຄູ່ມື 5 ເຫຼັ້ມທີ່ສ້າງຂຶ້ນເພື່ອ *'ສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ'*. ປື້ມຄູ່ມືສະບັບນີ້ແມ່ນສາມາດນຳໃຊ້ໄດ້ເລີຍ ຫຼື ຈະໃຊ້ປະກອບກັບປື້ມຄູ່ມືອີກ 4 ເຫຼັ້ມທີ່ຍັງເຫຼືອ ຄື: ເຫຼັ້ມທີ 1 ໄດ້ສະເໜີກ່ຽວກັບ *'ພາກສະເໜີ'*, ເຫຼັ້ມທີ 2 ໄດ້ອະທິບາຍກ່ຽວກັບ *'ນະໂຍບາຍ'*, ເຫຼັ້ມທີ 3 ໄດ້ເນັ້ນໃສ່ *'ຫຼັກສູດ'* ແລະ ເຫຼັ້ມທີ 5 ແມ່ນໄດ້ຍົກໃຫ້ເຫັນ *'ວິທີສິດສອນ'*.

ປື້ມຄູ່ມືເຫຼັ້ມນີ້ ແມ່ນໄດ້ເນັ້ນໜັກໃສ່ສິ່ງທ້າທາຍ ແລະ ອຸປະສັກຕ່າງໆໃນການນຳໃຊ້ອຸປະກອນການຮຽນ-ການສອນໃນການສ້າງຄູ. ປື້ມຄູ່ມືເຫຼັ້ມນີ້ຍັງໄດ້ສະເໜີຍຸດທະສາດ ແລະ ວິທີການແກ້ໄຂບັນຫາຕ່າງໆໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງທາງດ້ານການສຶກສາເພື່ອສະໜັບສະໜູນ ແລະ ສົ່ງເສີມການປັບປຸງ, ການພັດທະນາ ແລະ ການຈັດຕັ້ງປະຕິບັດວິທີການສິດສອນການສຶກສາຮຽນຮ່ວມ.

## ວັດຖຸອຸປະກອນການສ້າງຄູໝາຍເຖິງຫຍັງ?

ວັດຖຸອຸປະກອນການສ້າງຄູກວມເອົາວັດຖຸອຸປະກອນໃນຂອບເຂດກວ້າງຂວາງເຊິ່ງລວມທັງບັນດາສື່ອຸປະກອນການຮຽນ-ການສອນທີ່ຄູໃນສະຖາບັນສ້າງຄູໄດ້ນຳໃຊ້ ເພື່ອຊ່ວຍເຂົ້າໃນການສອນ ແລະ ບັນດາວັດຖຸອຸປະກອນທີ່ນັກຮຽນຄູນຳໃຊ້ ເພື່ອຊ່ວຍໃນການຮຽນ. ໃນປື້ມຄູ່ມືເຫຼັ້ມນີ້ແມ່ນຈະໄດ້ສຶກສາລົງເລິກ ກ່ຽວກັບວັດຖຸອຸປະກອນການຮຽນ-ການສອນ ທີ່ໄດ້ນຳໃຊ້ເຂົ້າໃນການສ້າງຄູເຊິ່ງກົງກັນຂ້າມກັບວັດຖຸອຸປະກອນທີ່ຄູ ແລະ ເດັກນັກຮຽນໄດ້ນຳໃຊ້ຢູ່ໃນຂັ້ນໂຮງຮຽນ.

ບັນດາຕົວຢ່າງຂອງວັດຖຸອຸປະກອນການສ້າງຄູປະກອບດ້ວຍ:

- ປື້ມອ່ານ
- ປື້ມຝຶກຫັດ, ເອກະສານແຈກຢາຍ, ລາຍການກວດສອບ ແລະ ອື່ນໆ
- ເອກະສານອ້າງອີງ
- ໂປດສະເຕີ້ ແລະ ສື່ພາບຕ່າງໆ
- ແບບຈຳລອງ, ຮູບພາບທີ່ເຫັນດ້ວຍຕາ ແລະ ຮູບພາບທີ່ສຳພັດໄດ້
- ວິດີໂອ ແລະ ເຄື່ອງສຽງ
- ຊອບແວຄອມພິວເຕີ
- ວັດຖຸຕົວຈິງ

ວັດຖຸອຸປະກອນການສ້າງຄູ ຄວນປະກອບເພີ່ມເຕີມໃຫ້ຫຼັກສູດຢ່າງໃກ້ສິດ ແລະ ຊ່ວຍບັນດາຄູໃນສະຖາບັນສ້າງຄູໃນການສອນຫຼັກສູດນັ້ນ. ແຕ່ເຖິງຢ່າງໃດກໍ່ຕາມ ເຖິງແມ່ນວ່າຫຼັກສູດການສ້າງຄູ ແລະ ວັດຖຸອຸປະກອນຂອງການສ້າງຄູ ໄດ້ມີການພົວພັນຢ່າງສະໜິດແໜ້ນນຳກັນກໍ່ຕາມ ແຕ່ວ່າທັງສອງຢ່າງຫາກບໍ່ແມ່ນສິ່ງດຽວກັນຢ່າງຂາດໂຕ. ຫຼັກສູດເປັນວິທີທາງຂອງການຈັດຕັ້ງ ແລະ ການຈັດລຽງປະສົບການຮຽນຮູ້ໂດຍມີຈຸດປະສົງ ເພື່ອບັນລຸຜົນການຮຽນສະເພາະດ້ານໃດໜຶ່ງ. ຫຼັກສູດນັ້ນຈະຊີ້ນຳສິ່ງທີ່ຈະຮຽນຮູ້ ພ້ອມທັງອະທິບາຍເຫດຜົນວ່າເປັນຫຍັງຈຶ່ງຮຽນ ແລະ ຮຽນດ້ວຍວິທີໃດ? ວັດຖຸອຸປະກອນທີ່ກ່າວມານັ້ນ ຈະສົ່ງເສີມຂະບວນການຮຽນ-ການສອນ ແຕ່ວ່າກໍ່ອາດຈະເປັນໄປໄດ້ເຊັ່ນ

ດຽວກັນທີ່ເກີດມີສະພາບການໃດໜຶ່ງ ເຊິ່ງວັດຖຸອຸປະກອນທີ່ນຳໃຊ້ນັ້ນບໍ່ສອດຄ່ອງ ຫຼື ບໍ່ຊ່ວຍເຫຼືອຫຼັກສູດໂດຍລວມ.

## ເປັນຫຍັງວັດຖຸອຸປະກອນການສ້າງຄູຈຶ່ງເປັນປະເດັນສຳຄັນສຳລັບການໂຄສະນາສົ່ງເສີມ?

ໃນສະພາບການຂອງການຮຽນ-ການສອນໃດກໍ່ຕາມວັດຖຸອຸປະກອນ ແມ່ນມີຄວາມສຳຄັນຫຼາຍ. ສຳລັບນັກຮຽນຄູ ວັດຖຸອຸປະກອນຈະຊ່ວຍໃຫ້ເຂົາເຈົ້າເຂົ້າໃຈໄດ້ຢ່າງເຖິງຖອງໃນແນວຄວາມຄິດທາງທິດສະດີສຳຄັນ ແລະ ຍັງຖ່າຍທອດປະສົບການພາກປະຕິບັດ ແລະ ປະສົບການໃນຊີວິດຈິງ ທີ່ຊ່ວຍນຳທິດສະດີໃຫ້ລົງສູ່ສະພາບຕົວຈິງອີກດ້ວຍ.

ໃນສະພາບການໃດໜຶ່ງທີ່ສົມບູນ ບັນດາຄູໃນສະຖາບັນສ້າງຄູຈະສະໜັບສະໜູນການສ້າງຄູໃໝ່ເຊິ່ງເປັນຜູ້ທີ່ຄົ້ນຄິດວິຈານ, ເປັນເອກະລາດ ແລະ ທັງເປັນຜູ້ທີ່ອ່ານວັດຖຸອຸປະກອນແລ້ວຍັງສາມາດສ້າງບົດສະຫຼຸບຂອງຕົນກ່ຽວກັບ ຄວາມສອດຄ່ອງ ແລະ ການນຳໃຊ້ສິ່ງທີ່ພວກເຂົາເຈົ້າໄດ້ອ່ານນັ້ນ. ເຖິງແມ່ນວ່າໃນເວລາທີ່ນັກຮຽນຄູມີຄວາມໝັ້ນໃຈໃນການຕຳນິ ສິ່ງທີ່ພວກເຂົາອ່ານຢູ່ນັ້ນ ແຕ່ວ່າຍັງສຳຄັນທີ່ວັດຖຸອຸປະກອນການສ້າງຄູນັ້ນ ຕ້ອງເປັນມິດກັບນັກຮຽນ, ມີຄຸນນະພາບສູງ, ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດເຂົ້າເຖິງໄດ້.

ສະນັ້ນ, ໄປຄຽງຄູ່ກັບຄວາມພະຍາຍາມໃນການປະຕິຮູບ ຫຼັກສູດການສ້າງຄູເພື່ອກະກຽມຄູສຳລັບການສຶກສາຮຽນຮ່ວມແລ້ວ ຍັງມີຄວາມຈຳເປັນຕ້ອງທົບທວນ ວັດຖຸອຸປະກອນທີ່ນຳໃຊ້ຢູ່ໃນຫຼັກສູດການສ້າງຄູນັ້ນໃຫ້ສອດຄ່ອງການຳກັນຕື່ມອີກ.

---

# ບັນຫາທ້າທາຍ 1

## ວັດຖຸອຸປະກອນທີ່ເໝາະສົມ

### ການວິເຄາະສະພາບການ

*ຂາດເຂີນວັດຖຸອຸປະກອນ ສຳລັບ ການສຶກສາຮຽນຮ່ວມ*

ໂດຍທົ່ວໄປແລ້ວ ມີຫຼາຍສະພາບການທີ່ຂາດເຂີນວັດຖຸອຸປະກອນການຮຽນ-ການສອນສຳລັບໂຮງຮຽນ ແລະ ສຳລັບສະຖາບັນສ້າງຄູ. ສະນັ້ນ, ບາງເທື່ອອາດບໍ່ແມ່ນເລື່ອງແປກທີ່ຂາດເຂີນວັດຖຸອຸປະກອນການຮຽນ-ການສອນ ສຳລັບ ການສຶກສາຮຽນຮ່ວມໃນຫຼາຍສະຖາບັນສ້າງຄູ. ເຖິງຢ່າງໃດກໍຕາມ ດັ່ງທີ່ພວກເຮົາໄດ້ເຫັນກ່ຽວກັບປະເດັນຂອງຫຼັກສູດໃນ *ປື້ມຄູ່ມືເຫຼັ້ມທີ 3* ນັ້ນ, ວິທີການທີ່ມີປະສິດທິພາບບໍ່ຈຳເປັນຮຽກຮ້ອງໃຫ້ມີຫຼັກສູດແຍກຕ່າງຫາກ (ແລະ ວັດຖຸອຸປະກອນ

ແຍກຕ່າງຫາກ) ສໍາລັບການສຶກສາຮຽນຮ່ວມ ແຕ່ວ່າສິ່ງດັ່ງກ່າວໄດ້ຮຽກຮ້ອງໃຫ້ພວກເຮົາຕ້ອງຮັບປະກັນວ່າ ການສຶກສາຮຽນຮ່ວມແມ່ນເປັນສ່ວນໜຶ່ງ ແລະ ເປັນຂໍ້ຄວາມທີ່ມີຢູ່ໃນປື້ມອ່ານທັງໝົດ ແລະ ໃນວັດຖຸອຸປະກອນການສ້າງຄູທັງໝົດ.

ການທົບທວນ ການສ້າງຄູໃນຫວ່າງບໍ່ດົນມານີ້ ໂດຍອີງການອຸຍເນັດສະໂກບາງກອກ ໄດ້ເນັ້ນໜັກໃຫ້ເຫັນວ່າສິ່ງດັ່ງກ່າວນີ້ມັກຈະບໍ່ເກີດຂຶ້ນ. ຍົກຕົວຢ່າງ: ໃນບາງປະເທດການວິເຄາະປື້ມອ່ານຂອງຫຼັກສູດການສ້າງຄູ ແລະ ວັດຖຸອຸປະກອນອື່ນໆ ທີ່ກ່ຽວຂ້ອງໄດ້ຊີ້ໃຫ້ເຫັນວ່າ ການສຶກສາຮຽນຮ່ວມ ແລະ ແນວຄວາມຄິດຂອງການສຶກສາຮຽນຮ່ວມບໍ່ໄດ້ຖືກກ່າວເຖິງ ຫຼື ບໍ່ໄດ້ຮັບການພິຈາລະນາຢູ່ໃນນັ້ນ [1] ວັດຖຸອຸປະກອນການສ້າງຄູ ມັກຈະພາດໂອກາດໃນການຖ່າຍທອດຂໍ້ຄວາມກ່ຽວກັບຄວາມສະເໝີພາບ ແລະ ການຮຽນຮ່ວມ.

## *ວັດຖຸອຸປະກອນມັກຈະບໍ່ສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈກວ້າງຂວາງກ່ຽວກັບການສຶກສາຮຽນຮ່ວມ*

ໃນເວລາທີ່ມີວັດຖຸອຸປະກອນ ສໍາລັບການສຶກສາຮຽນຮ່ວມ (ອາດເປັນແຫຼ່ງແຍກຕ່າງຫາກ ຫຼື ປະກອບຢູ່ໃນວັດຖຸອຸປະກອນຫຼັກ) ເຊິ່ງສິ່ງດັ່ງກ່າວອາດບໍ່ໄດ້ສຶກສາ ກ່ຽວກັບການສຶກສາຮຽນຮ່ວມຢ່າງລະອຽດ ໃນຖານະເປັນປະເດັນທີ່ກວມລວມ, ແຕ່ຈະເນັ້ນໜັກສະເພາະຄວາມພິການ ຫຼື ຄວາມຕ້ອງການພິເສດ. ສິ່ງດັ່ງກ່າວນີ້ ສະທ້ອນໃຫ້ເຫັນເຖິງວິທີການຕ່າງໆທີ່ພົບເຫັນຢູ່ໃນຫຼາຍຫຼັກສູດການສ້າງຄູ.

ຍົກຕົວຢ່າງ: ໃນປະເທດໜຶ່ງທີ່ໄດ້ສຶກສາຄົ້ນຄວ້າໃນຫວ່າງບໍ່ດົນມານີ້, ໄດ້ສັງເກດເຫັນວ່າ: "… ເອກະສານແຈກຢາຍ ແມ່ນໄດ້ຖືກນໍາໃຊ້ສ່ວນຫຼາຍເປັນອຸປະກອນຝຶກອົບຮົມ ແລະ ສິ່ງເຫຼົ່ານີ້ໄດ້ເນັ້ນໃຫ້ເຫັນເຖິງບັນຫາທ້າທາຍຂອງເດັກທີ່ມີຄວາມຕ້ອງການພິເສດກໍາລັງປະເຊີນໜ້າຢູ່ ແຕ່ມັນຫາກບໍ່ໄດ້ນໍາໃຊ້ວິທີການທີ່ຂ້ອນຂ້າງກວມລວມສໍາລັບການສຶກສາຮຽນຮ່ວມ".[2]

ສິ່ງນີ້ອາດເປັນຍ້ອນວ່າງົບປະມານບໍ່ພຽງພໍສໍາລັບການທົບທວນ ແລະ ການປັບປຸງອຸປະກອນການສ້າງຄູຢ່າງເປັນປະຈໍາ ຫຼື ຍ້ອນວ່າ ຄວາມສໍາຄັນຂອງຂະບວນການປັບປຸງດັ່ງກ່າວນັ້ນບໍ່ເປັນທີ່ຮັບຮູ້ ແລະ ບໍ່ໄດ້ບັນຈຸຢູ່ໃນຍຸດທະສາດ ແລະ ງົບປະມານຂອງກະຊວງ ແລະ ສະຖາບັນສ້າງຄູ. ພ້ອມນັ້ນອາດຍັງສະທ້ອນໃຫ້ເຫັນເຖິງການຂາດເຂີນການພັດທະນາວິຊາຊີບຢ່າງຕໍ່ເນື່ອງໃນກຸ່ມຄົນຜູ້ທີ່ຮັບຜິດຊອບການວາງແຜນ ແລະ ການພັດທະນາວັດຖຸອຸປະກອນການສ້າງຄູ. ພວກເຂົາເຈົ້າຍັງຄົງບໍ່ທັນຮັບຮູ້ເຖິງຄວາມຈໍາເປັນໃນການປ່ຽນແປງ ຫຼື ຍັງບໍ່ທັນແນ່ໃຈກ່ຽວກັບວິທີການເຮັດໃຫ້ມີການປ່ຽນແປງ.

---

[1] ໂດຍ Forgacs, R. ປີ 2012. ການສ້າງຄວາມເຂັ້ມແຂງໃຫ້ ການສຶກສາຄູ ເພື່ອບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ ພາຍໃນປີ 2015. ຈະເຮັດແນວໃດ ເພື່ອກະກຽມນັກຮຽນຄູ ໃຫ້ສາມາດ ປັບປ່ຽນ ທັດສະນະຄະຕິ ແລະ ການປະຕິບັດ ແບບມີສ່ວນຮ່ວມ ໃນເວລາທີ່ພວກເຂົາເລີ່ມການສິດສອນ? ການສົມມຸດຖານ ແລະ ການວິເຄາະ ບົດທົບທວນ ລະບົບການສຶກສາຄູກ່ອນປະຈໍາການ ໃນປະເທດ ບັງກະລາເທດ, ກໍາປູເຈຍ, ຈີນ, ສປປ ລາວ, ມົງໂກເລຍ, ເນປານ, ໄທ ແລະ ຫວຽດນາມ (2008-2011). ບາງກອກ, ຢູເນັດສະໂກ, ໜ້າທີ 33.

[2] Ibid., ໜ້າທີ 34.

## *ວັດຖຸອຸປະກອນ ມັກຈະບໍ່ສອດຄ່ອງກັບ ສະພາບການຂອງທ້ອງຖິ່ນ*

ວັດຖຸອຸປະກອນການສ້າງຄູຈຳນວນໜຶ່ງ ບໍ່ໄດ້ກຳເນີດມາຈາກສະພາບການຂອງນັກຮຽນຄູ ຍົກຕົວຢ່າງ: ບັນດາປຶ້ມທີ່ຈັດພິມໃນເອີຣົບ, ສະຫະລັດອາເມລິກາ ຫຼື ອົດສະຕຣາລີ ອາດນຳມາໃຊ້ຢູ່ໃນທົ່ວອາຊີ. ເຖິງແມ່ນວ່າ ປຶ້ມຫຼາຍເຫຼັ້ມໃນຈຳນວນນີ້ ອາດມີຂໍ້ຄວາມທີ່ພົ້ນເດັ່ນກ່ຽວກັບການສຶກສາຮຽນຮ່ວມ, ແຕ່ວ່າປຶ້ມເຫຼົ່ານັ້ນອາດຖ່າຍທອດແນວຄວາມຄິດທີ່ບັນດານັກຮຽນຄູ ຈະພົບກັບອຸປະສັກໃນການຈັດຕັ້ງປະຕິບັດໃນສະພາບການຂອງພວກເຂົາເຈົ້າ, ໂດຍສະເພາະແມ່ນ ໃນກໍລະນີທີ່ມີຄວາມແຕກຕ່າງໃນທາງດ້ານແຫຼ່ງທີ່ມາ, ວັດທະນະທຳ ແລະອື່ນໆ. ສິ່ງດັ່ງກ່າວນີ້ສາມາດເຮັດໃຫ້ນັກຮຽນຄູຮູ້ສຶກວ່າ ການສຶກສາຮຽນຮ່ວມແມ່ນວິທີການທີ່ນຳເຂົ້າມາ ເຊິ່ງບໍ່ສອດຄ່ອງກັບປະເທດຂອງພວກເຂົາເຈົ້າ ຫຼື ອາດເຮັດໃຫ້ບັນດານັກຮຽນຄູ ຕ້ອງລົງແຮງຫຼາຍໃນການຮ່ຳຮຽນ ແລະພະຍາຍາມຈັດຕັ້ງປະຕິບັດ ວິທີການທີ່ບໍ່ສອດຄ່ອງກັບສະພາບການສະເພາະເຈາະຈົງສຳລັບພວກເຂົາເຈົ້າ.

ວັດຖຸອຸປະກອນການສ້າງຄູທີ່ມາຈາກບັນດາປະເທດ ແລະ ຂົງເຂດພາກພື້ນອື່ນໆ ອາດເປັນປະໂຫຍດສຳລັບ ການປຽບທຽບ ແນວຄວາມຄິດ ແລະ ວິທີການຕ່າງໆ. ເຖິງຢ່າງໃດກໍ່ຕາມຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູມັກຈະບໍ່ໄດ້ຮັບຄຳແນະນຳ ແລະ ການຊ່ວຍເຫຼືອທີ່ພວກເຂົາເຈົ້າຕ້ອງການ ເພື່ອຕີຄວາມໝາຍ ແລະ ປັບປຸງແນວຄວາມຄິດເຫຼົ່ານີ້ ຫຼື ຕົວຢ່າງຕ່າງໆຈາກແວດລ້ອມອື່ນເພື່ອໃຫ້ສອດຄ່ອງກັບສະພາບການຂອງພວກເຂົາເຈົ້າເອງ.

ນອກຈາກນັ້ນແລ້ວ ວັດຖຸອຸປະກອນທີ່ນຳເຂົ້າມານັ້ນອາດເປັນພາສາອັງກິດ ຫຼື ອາດແປເປັນພາສາກາງຂອງປະເທດນັ້ນແລ້ວ ແຕ່ວ່າ ມີຄວາມເປັນໄປໄດ້ໜ້ອຍທີ່ຈະແປເປັນພາສາຊົນເຜົ່າຕ່າງໆ ເຊິ່ງອາດຈຳກັດການນຳໃຊ້ຂອງນັກຮຽນຄູທຸກຄົນ.

ບັນດາວັດຖຸອຸປະກອນການສ້າງຄູ ທີ່ຜະລິດຂຶ້ນຢູ່ໃນທ້ອງຖິ່ນເອງກໍອາດບໍ່ສອດຄ່ອງກັບສະພາບຕົວຈິງ ຂອງບ່ອນທີ່ໄດ້ນຳໃຊ້ນັ້ນ. ບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ (ກໍເຊັ່ນດຽວກັນກັບຜູ້ສ້າງຫຼັກສູດ) ບໍ່ໄດ້ເປັນຕົວແທນໃຫ້ກຸ່ມຄົນທີ່ຫຼາກຫຼາຍໃນປະເທດນັ້ນໃນທາງດ້ານບົດບາດຍິງ-ຊາຍ, ຄວາມພິການ, ຊົນເຜົ່າ, ພາສາ ແລະ ເຂດຊົນນະບົດ/ເທດສະບານ. ສະນັ້ນ, ບັນດາຜູ້ກະກຽມວັດຖຸອຸປະກອນການສ້າງຄູອາດສະແດງໃຫ້ເຫັນເຖິງ (ໂດຍບໍ່ຕັ້ງໃຈ) ຄວາມລຳອຽງດ້ານວັດທະນະທຳ ຫຼື ທັດສະນະແບບຕາຍຕົວເຊິ່ງພົບເຫັນແຜ່ຫຼາຍກ່ຽວກັບກຸ່ມຄົນພິການທີ່ມີຢູ່ໃນສັງຄົມ ແລະ ຝັງເລິກສິ່ງເຫຼົ່ານັ້ນໃສ່ໃນວັດຖຸອຸປະກອນທີ່ພວກເຂົາເຈົ້າສ້າງຂຶ້ນມາ.

ຄຳຖາມຕ່າງໆທີ່ທ່ານສາມາດຖາມ ເພື່ອຊ່ວຍວິເຄາະສະຖານະພາບ ໃນສະພາບການຂອງທ່ານ:

- ໂດຍທົ່ວໄປແລ້ວ ສະຖາບັນການສ້າງຄູ ແລະ ນັກຮຽນຄູ ສາມາດເຂົ້າເຖິງວັດຖຸອຸປະກອນການຮຽນ-ການສອນ ໃນປະລິມານທີ່ພຽງພໍບໍ? ມີຫ້ອງສະໝຸດທີ່ມີປຶ້ມຫຼາຍບໍ? ແລະ ໃນຮ້ານຂາຍປຶ້ມຂອງສະຖາບັນ ມີປຶ້ມສຳລັບຂາຍໃນລາຄາທີ່ສາມາດຊື້ໄດ້ບໍ?
- ມີວັດຖຸອຸປະກອນສ້າງຄູຫຼາຍເທົ່າໃດ? (ກ) ທີ່ເນັ້ນໜັກສະເພາະເຈາະຈົງ ກ່ຽວກັບການສຶກສາຮຽນຮ່ວມ ແລະ (ຂ) ທີ່ກ່າວເຖິງການສຶກສາຮຽນຮ່ວມໃນເວລາທີ່ສົນທະນາ ກ່ຽວກັບເລື່ອງອື່ນ?
- ມີຄວາມສອດຄ່ອງກັນດີບໍ່ ລະຫວ່າງຫຼັກສູດ ແລະ ວັດຖຸອຸປະກອນ?
- ວັດຖຸອຸປະກອນສ້າງຄູທີ່ກວມເອົາການສຶກສາຮຽນຮ່ວມ ໄດ້ຖ່າຍທອດທັດສະນະແນວຄວາມຄິດທີ່ຈະແຈ້ງບໍ ຫຼື ວ່າເນັ້ນໜັກໃສ່ພຽງແຕ່ຄວາມພິການ ແລະ ຄວາມຕ້ອງການພິເສດ

ເທົ່ານັ້ນ? ວັດຖຸອຸປະກອນເຫຼົ່ານີ້ໄດ້ສົ່ງເສີມໃຫ້ນັກຮຽນທຸກຄົນໄດ້ຄົ້ນຄິດກ່ຽວກັບປະເດັນຂອງຄວາມຕ້ອງການພິເສດ ແລະ ຄວາມພິການ ແລະ ປະເດັນອື່ນໆ ກ່ຽວກັບຄວາມຫຼາຍຫຼາຍ ແລະ ການຈຳແນກບໍ? ຫຼື ວັດຖຸອຸປະກອນເຫຼົ່ານີ້ໄດ້ມີຈຸດປະສົງພຽງແຕ່ໃຫ້ນັກຮຽນຄູທີ່ຢູ່ໃນຫຼັກສູດພິເສດນຳໃຊ້ເທົ່ານັ້ນ?

- ມີວັດຖຸອຸປະກອນສ້າງຄູບໍ ທີ່ສົນທະນາສະເພາະເຈາະຈົງ ກ່ຽວກັບ ບັນຫາທ້າທາຍຂອງ (ກ) ການສິດສອນເດັກຈາກກຸ່ມອາຍຸທີ່ແຕກຕ່າງກັນ, (ຂ) ການຮັບປະກັນວ່າ ເດັກທຸກຄົນໄດ້ເຂົ້າຮ່ວມໃນການຮຽນຮູ້ໃນຫ້ອງຮຽນໃຫຍ່, (ຄ) ການກຳຈັດຄວາມລຳອຽງຍິງ-ຊາຍ ຈາກວິທີການສິດສອນ ແລະ (ງ) ການສິດສອນໃນຫ້ອງຮຽນຫຼາຍພາສາ ແລະ ການສິດສອນເປັນພາສາແມ່? ວັດຖຸອຸປະກອນການສ້າງຄູມີຄຳແນະນຳພາກປະຕິບັດບໍ່ກ່ຽວກັບປະເດັນເຫຼົ່ານີ້?
- ມີວັດຖຸອຸປະກອນການສ້າງຄູຫຼາຍເທົ່າໃດ ຫຼື ວັດຖຸອຸປະກອນສ້າງຄູອັນໃດທີ່ກວມເອົາການສຶກສາຮຽນຮ່ວມທີ່ໄດ້ຈັດພິມໃນທ້ອງຖິ່ນ/ໃນທົ່ວປະເທດ ແລະ ມີວັດຖຸອຸປະກອນສ້າງຄູຫຼາຍເທົ່າໃດ ຫຼື ວັດຖຸອຸປະກອນການສ້າງຄູ ອັນໃດທີ່ຖືກຈັດພິມຢູ່ນອກຂົງເຂດພາກພື້ນຂອງທ່ານ?
- ວັດຖຸອຸປະກອນທີ່ບໍ່ຜະລິດໃນທ້ອງຖິ່ນນັ້ນແມ່ນມາຈາກໃສ? ພົບເຫັນ ແລະ ຄັດເລືອກເອົາມານຳໃຊ້ຄືແນວໃດ?
- ວັດຖຸອຸປະກອນທີ່ບໍ່ຜະລິດຢູ່ໃນທ້ອງຖິ່ນນັ້ນໄດ້ຜ່ານການທົບທວນຄືນໃໝ່ບໍ່ ເພື່ອໃຫ້ສອດຄ່ອງກັບສະພາບການກ່ອນທີ່ຈະເອົາເຂົ້າໃສ່ໃນລາຍການວັດຖຸອຸປະກອນສ້າງຄູທີ່ໄດ້ອະນຸມັດແລ້ວ/ໄດ້ແນະນຳໃຫ້ນຳໃຊ້ ແລະຄູໃນສະຖາບັນສ້າງຄູໄດ້ຮັບຄຳແນະນຳບໍ ກ່ຽວກັບວິທີການປັບປຸງວັດຖຸອຸປະກອນເຫຼົ່ານັ້ນໃຫ້ສອດຄ່ອງກັບສະພາບການຂອງທ້ອງຖິ່ນ?
- ມີວັດຖຸອຸປະກອນສ້າງຄູຫຼາຍເທົ່າໃດ ທີ່ກວມເອົາການສຶກສາຮຽນຮ່ວມ (ໂດຍສະເພາະແມ່ນຂໍ້ຄວາມຕ່າງໆ) ທີ່ໄດ້ຈັດພິມເປັນພາສາທ້ອງຖິ່ນ ຫຼື ພາສາແຫ່ງຊາດ?
- ປະຊາຊົນຈາກກຸ່ມສັງຄົມທີ່ແຕກຕ່າງກັນ (ຊາຍ, ຍິງ, ຄົນພິການຫຼືບໍ່ພິການ, ຈາກກຸ່ມຊົນເຜົ່າ ແລະ ກຸ່ມໃຊ້ພາສາທີ່ແຕກຕ່າງກັນ, ຈາກເຂດຊົນນະບົດ ແລະ ເທດສະບານ) ໄດ້ເຂົ້າຮ່ວມໃນການສ້າງ ແລະ ການອອກແບບວັດຖຸອຸປະກອນສ້າງຄູ ສຳລັບການສຶກສາຮຽນຮ່ວມບໍ? ພວກເຂົາເຈົ້າໄດ້ເຂົ້າຮ່ວມໃນນາມ ທີ່ເປັນຜູ້ສ້າງວັດຖຸອຸປະກອນນັ້ນ ແລະ ເປັນນັກສິນລະປິນທີ່ວາດພາບປະກອບໃຫ້ອຸປະກອນນັ້ນ? ຫຼື ພວກເຂົາເຈົ້າເຂົ້າຮ່ວມຜ່ານທາງຂະບວນການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ? ຫຼື ທັງສອງກໍລະນີ?

## ເປົ້າໝາຍຂອງການໂຄສະນາສົ່ງເສີມ

ໃນສະພາບການໃດກໍ່ຕາມ, ພວກເຮົາອາດສາມາດຮຽກຮ້ອງໃຫ້ມີແຫຼ່ງຊັບພະຍາກອນ ແລະ ວັດຖຸອຸປະກອນການຮຽນ-ການສອນໃຫ້ຫຼາຍຂຶ້ນກວ່າເກົ່າ. ສຳລັບການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ ແລະ ການສຶກສາຮຽນຮ່ວມນັ້ນແມ່ນມີຄວາມສຳຄັນ ທີ່ຕ້ອງມີຄວາມຈະແຈ້ງກ່ຽວກັບປະເພດ ແລະ ຄຸນນະພາບຂອງວັດຖຸອຸປະກອນການສ້າງຄູທີ່ຈຳເປັນ, ບໍ່ສະເພາະແຕ່ ດ້ານປະລິມານເທົ່ານັ້ນ.

### ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 1

*"ການສຶກສາຮຽນຮ່ວມ ຄວນໄດ້ຮັບການແກ້ໄຂ ໂດຍຜ່ານທາງວັດຖຸອຸປະກອນການສ້າງຄູແບບສະເພາະເຈາະຈົງ ແລະ ໂດຍການຝັງແໜ້ນ ປະເດັນນີ້ເຂົ້າໃນວັດຖຸອຸປະກອນການສ້າງຄູທັງໝົດ".*

ນັກຮຽນຄູ ແລະ ຄູໃນສະຖາບັນສ້າງຄູຈຳເປັນຕ້ອງສາມາດເຂົ້າເຖິງວັດຖຸອຸປະກອນ ກ່ຽວກັບການສຶກສາຮຽນຮ່ວມຈຳນວນຫຼາຍ, ທັງວັດຖຸອຸປະກອນສຳລັບການສຶກສາຮຽນຮ່ວມໂດຍສະເພາະ ແລະ ທັງວັດຖຸອຸປະກອນການສ້າງຄູ ສະເພາະວິຊາທີ່ປະກອບມີຂໍ້ຄວາມກ່ຽວກັບການສຶກສາຮຽນຮ່ວມ (ເຊັ່ນວ່າ ປະເດັນຂອງການສຶກສາຮຽນຮ່ວມ ທີ່ຍົກຂຶ້ນມາໃນວັດຖຸອຸປະກອນການສ້າງຄູທີ່ເນັ້ນໜັກໃສ່ວິຊາຄະນິດສາດ, ວິທະຍາສາດ, ປະຫວັດສາດ ແລະ ອື່ນໆ).

ວັດຖຸອຸປະກອນເຫຼົ່ານີ້ ຈຳເປັນທີ່ຕ້ອງໃຫ້ມີການຕີຄວາມໝາຍທີ່ກວມລວມສຳລັບ ການສຶກສາຮຽນຮ່ວມ, ຊ່ວຍນັກຮຽນຄູໃຫ້ເຂົ້າໃຈເຖິງ ຄວາມສຳຄັນຂອງການປ່ຽນແປງໂຮງຮຽນທັງໝົດ, ພ້ອມທັງຊ່ວຍນັກຮຽນຄູໃຫ້ມີທັກສະ ແລະ ຄວາມໝັ້ນໃຈໃນການແກ້ໄຂ ຄວາມຕ້ອງການໃນການຮຽນຮູ້ຂອງແຕ່ລະຄົນ. ວັດຖຸອຸປະກອນການສ້າງຄູຍັງຈຳເປັນຕ້ອງໄດ້ລະບຸອອກຢ່າງຈະແຈ້ງ ແລະ ຊັດເຈນວ່າວັດຖຸອຸປະກອນເຫຼົ່ານີ້ສອນນັກຮຽນຄູ ກ່ຽວກັບການສຶກສາຮຽນຮ່ວມ ຫຼືວ່າ ວັດຖຸອຸປະກອນເຫຼົ່ານີ້ ແມ່ນເນັ້ນໜັກໃສ່ພຽງແຕ່ກຸ່ມສະເພາະໃດໜຶ່ງ ເຊັ່ນວ່າ: ກຸ່ມນັກຮຽນພິການ.

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 2

> *"ວັດຖຸອຸປະກອນສ້າງຄູ ຈຳເປັນຕ້ອງສ້າງຂຶ້ນໃນຂັ້ນປະເທດ/ຂັ້ນພາກພື້ນ ແລະ ປະກອບດ້ວຍຂໍ້ມູນ ແລະ ຕົວຢ່າງ ກ່ຽວກັບການສຶກສາຮຽນຮ່ວມທີ່ສອດຄ່ອງກັບສະພາບການ ແລະ ໃໝ່ຫຼ້າສຸດ. ວັດຖຸອຸປະກອນການສ້າງຄູ ທີ່ນຳເຂົ້າມານັ້ນຕ້ອງນຳໃຊ້ໃນລັກສະນະທີ່ສ້າງສັນ ແລະ ມີການວິເຄາະໃຈ້ແຍກລະອຽດ".*

ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູຈຳເປັນຕ້ອງເຂົ້າເຖິງວັດຖຸອຸປະກອນ ກ່ຽວກັບການສຶກສາຮຽນຮ່ວມທີ່ສອດຄ່ອງກັບສະພາບການໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າເຊິ່ງມີຄວາມຈຳເປັນຈະຕ້ອງສ້າງວັດຖຸອຸປະກອນການສ້າງຄູໃຫ້ຫຼາຍຂຶ້ນກວ່າເກົ່າ ທັງພາຍໃນປະເທດ ແລະ ໃນຂັ້ນພາກພື້ນໂດຍເນັ້ນໜັກໃສ່ກໍລະນີສຶກສາ ແລະ ຕົວຢ່າງຂອງທ້ອງຖິ່ນທີ່ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູສາມາດອະທິບາຍໄດ້. ນອກຈາກນັ້ນແລ້ວ, ກໍ່ຍັງມີຄວາມຕ້ອງການ ວັດຖຸອຸປະກອນສ້າງຄູໃຫ້ຫຼາຍຂຶ້ນກວ່າເກົ່າທີ່ເປັນພາສາທ້ອງຖິ່ນ ແລະ ເປັນພາສາແຫ່ງຊາດ, ບໍ່ສະເພາະພຽງແຕ່ ເປັນການແປວັດຖຸອຸປະກອນ ທີ່ໄດ້ນຳເຂົ້າເທົ່ານັ້ນ ແຕ່ຫາກຍັງຕ້ອງມີວັດຖຸອຸປະກອນທີ່ຂຽນຂຶ້ນສະເພາະເຈາະຈົງສຳລັບການນຳໃຊ້ເປັນພາສາເຫຼົ່ານັ້ນ.

ຄວນຄັດເລືອກເອົາວັດຖຸອຸປະກອນການສ້າງຄູທີ່ນຳເຂົ້າຈາກປະເທດອື່ນ ໂດຍອີງຕາມຄວາມເປັນໄປໄດ້ຂອງວັດຖຸອຸປະກອນເຫຼົ່ານັ້ນໃນການສ້າງຄວາມເຂົ້າໃຈເພີ່ມຕື່ມ, ການພັດທະນາໃໝ່ໆ, ທັດສະນະຂອງສາກົນ ແລະ ການປຽບທຽບກັບສາກົນ, ແຕ່ວ່າບໍ່ຄວນເປັນວັດຖຸອຸປະກອນທີ່ນັກຮຽນຄູຕ້ອງເສຍເວລາອ່ານຫຼາຍໂພດ. ນອກນັ້ນ ກໍຄວນມີຄຳແນະນຳທີ່ດີໃຫ້ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຂອງພວກເຂົາ ກ່ຽວກັບວິທີການຕີຄວາມໝາຍ ແລະ ປັບປ່ຽນວັດຖຸອຸປະກອນທີ່ບໍ່ໄດ້ຜະລິດໃນທ້ອງຖິ່ນນັ້ນ. ໂດຍສະເພາະແລ້ວຄູໃນສະຖາບັນສ້າງຄູຕ້ອງການ ການສະໜັບສະໜູນ ເພື່ອສ້າງທັກສະ ແລະ ຄວາມໝັ້ນໃຈໃຫ້ກາຍເປັນຄົນຄົ້ນຄິດ, ຮູ້ເລືອກ ແລະ ມີຄວາມສ້າງສັນໃນການນຳໃຊ້ວັດຖຸອຸປະກອນສ້າງຄູ. ຍົກຕົວຢ່າງ: ໃນເວລານຳໃຊ້ປຶ້ມທີ່ຈັດພິມໃນປະເທດອື່ນນັ້ນ, ຄູໃນສະຖາບັນສ້າງຄູຈຳເປັນຕ້ອງມີທັກສະໃນການຊ່ວຍເຫຼືອນັກຮຽນຄູໃຫ້ພິຈາລະນາວ່າເວລາໃດຄວນປັບປ່ຽນແນວຄວາມຄິດຕ່າງໆໃຫ້ເຂົ້າກັບສະພາບການຂອງພວກເຂົາເຈົ້າ ແລະ ຈະຕ້ອງປັບປ່ຽນຄືແນວໃດ; ຄູໃນສະຖາບັນສ້າງຄູຈຳເປັນຕ້ອງສາມາດຊອກຫາກໍລະນີ ທີ່ເກີດຂຶ້ນໃນທ້ອງຖິ່ນ ເພື່ອເສີມສ້າງ ຫຼື ປ່ຽນແທນບັນດາຕົວຢ່າງຂອງຕ່າງປະເທດນັ້ນ ແລະ ອື່ນໆ.

ຈຸດຕ່າງໆເຫຼົ່ານີ້ແມ່ນມີຄວາມກ່ຽວຂ້ອງກັບຄວາມສາມາດຂອງພະນັກງານ ເຊິ່ງນໍາໄປສູ່ການສ້າງຂໍ້ຄວາມເພີ່ມຕື່ມ ເພື່ອວຽກງານສົ່ງເສີມ.

### ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 3

> *"ພະນັກງານທີ່ຮັບຜິດຊອບ ສໍາລັບການຄັດເລືອກ ແລະ/ຫຼື ການສ້າງວັດຖຸ ອຸປະກອນການສ້າງຄູຕ້ອງການ ການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ຕ້ອງການແລກປ່ຽນປະສົບການພາຍໃນປະເທດ ແລະ ລະຫວ່າງປະເທດ. ທີມງານສ້າງວັດຖຸອຸປະກອນສ້າງຄູຍັງຕ້ອງມີຄວາມຫຼາກຫຼາຍທີ່ຕາງໜ້າໃຫ້ປະເທດຂອງພວກເຂົາເຈົ້າ".*

ບັນດາພະນັກງານພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບສໍາລັບການຄັດເລືອກ ຫຼື ການອອກແບບວັດຖຸອຸປະກອນການສ້າງຄູ ຕ້ອງໄດ້ຮັບແຈ້ງລະອຽດກ່ຽວກັບການສຶກສາຮຽນຮ່ວມ. ຖ້າໃຫ້ ດີແທ້ໃນເວລາຮັບສະໝັກພະນັກງານໃໝ່ຄວນເບິ່ງທາງດ້ານປະສົບການ, ຄວາມຮູ້ ແລະ ທັກສະກ່ຽວກັບການສຶກສາຮຽນຮ່ວມ. ນອກນັ້ນກໍຍັງຕ້ອງພັດທະນາວິຊາຊີບຢ່າງຕໍ່ເນື່ອງ ສໍາລັບບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູທັງຄົນປະຈຸບັນ ແລະ ຄົນໃໝ່ ເພື່ອວ່າພວກເຂົາເຈົ້າຈະໄດ້ຮັບຮູ້ເລື່ອງໃໝ່ໆຈາກການສົນທະນາ ແລະ ການປະຕິບັດ ກ່ຽວກັບການສຶກສາຮຽນຮ່ວມ. ໃນລັກສະນະດຽວກັນນັ້ນ, ສິ່ງທີ່ສໍາຄັນທີ່ສຸດ ແມ່ນບັນດາຜູ້ສ້າງວັດຖຸອຸປະກອນຕ້ອງບໍ່ເຮັດວຽກແບບໂດດດ່ຽວ. ພວກເຂົາເຈົ້າຕ້ອງເຊື່ອມຕໍ່ເຂົ້າກັນກັບບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ ແລະ ຫຼັກສູດສ້າງຄູໃນຂັ້ນພາກພື້ນ ແລະ ຂັ້ນສາກົນ ແລະ ມີໂອກາດໃນການແລກປ່ຽນແນວຄວາມຄິດ ແລະ ຕົວຢ່າງຕ່າງໆກ່ຽວກັບວຽກງານຂອງພວກເຂົາເຈົ້າ.

# ບັນຫາທ້າທາຍ 2

## ວັດຖຸອຸປະກອນທີ່ເນັ້ນໜັກໃສ່ພາກປະຕິບັດ

### ການວິເຄາະສະພາບການ

*ການບັນທຶກ ແລະ ການແລກປ່ຽນ ປະສົບການພາກປະຕິບັດ ຍັງຄົງເປັນບັນຫາທ້າທາຍ*

ວັດຖຸອຸປະກອນການສ້າງຄູ (ຫຼັກສູດສ້າງຄູ) ສ່ວນຫຼາຍແລ້ວແມ່ນມັກຈະມີພາກທິດສະດີຫຼາຍ. ວັດຖຸອຸປະກອນເຫຼົ່ານີ້ ອາດປະກອບດ້ວຍກໍລະນີສຶກສາຈໍານວນໜ້ອຍ ແລະ ບໍ່ເນັ້ນໜັກພຽງພໍໃນການໃຫ້ຄໍາແນະນໍາແກ່ນັກຮຽນຄູ ກ່ຽວກັບວິທີການຫັນທິດສະດີລົງສູ່ພາກປະຕິບັດ.

ໃນບາງທິດທາງ ຮູບການທີ່ກ່າວມານີ້ອາດເປັນສ່ວນໜຶ່ງຂອງວົງຈອນຄວາມບົກພ່ອງ. ຢູ່ໃນທົ່ວໂລກຍັງຂາດກໍລະນີສຶກສາທີ່ໄດ້ບັນທຶກໄວ້ເປັນຢ່າງດີ ກ່ຽວກັບວິທີການປະຕິບັດການສຶກສາຮຽນຮ່ວມ. ຜູ້ຄົນທີ່ອາດຈະຢູ່ໃນຈຸດທີ່ດີສຸດຂອງການບັນທຶກປະສົບການພາກປະຕິບັດຂອງການສຶກສາຮຽນຮ່ວມ ເຊັ່ນວ່າ: ຄູ, ນັກຮຽນ, ຜູ້ປົກຄອງ ແລະ ອື່ນໆ ມັກຈະເປັນຜູ້ທີ່ ຂາດທັກສະ, ຂາດຄວາມໝັ້ນໃຈ, ບໍ່ມີເວລາ

ຫຼື ຂາດການສະໜັບສະໜູນໃຫ້ເຮັດວຽກງານນັ້ນ[3] .ໃນເມື່ອບໍ່ມີ ກຳລະນີສຶກສາ ເຊັ່ນນັ້ນ ແລະ ບໍ່ມີກົນໄກສະໜັບສະໜູນທີ່ສາມາດເຂົ້າເຖິງໄດ້ ເພື່ອບັນທຶກກໍລະນີສຶກສາ. ສະນັ້ນ ບັນດານັກຮຽນຄູ ແລະ ຄູ ມັກຈະພົບອຸປະສັກໃນການຈິນຕະນາການ ກ່ຽວກັບ ທິດສະດີ, ໃນການຈັດຕັ້ງປະຕິບັດແນວຄວາມຄິດໃໝ່ໆ ແລະ ໃນການແລກປ່ຽນແນວຄວາມຄິດຕ່າງໆກັບຄົນອື່ນໆ ເຊິ່ງຜົນທີ່ໄດ້ຮັບກໍ່ຄືວ່າ ຍັງຂາດເລື່ອງໃໝ່ໆສຳລັບໃຊ້ເຂົ້າໃນການສ້າງຄູ.

## *ບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ ອາດຂາດປະສົບການໃນພາກປະຕິບັດ*

ວັດຖຸອຸປະກອນການສ້າງຄູ ທີ່ຂາດຈຸດເນັ້ນໜັກໃສ່ພາກປະຕິບັດນັ້ນ ອາດສະທ້ອນໃຫ້ເຫັນເຖິງການຂາດປະສົບການໃນພາກປະຕິບັດຂອງການສຶກສາຮຽນຮ່ວມ ໃນກຸ່ມຜູ້ສ້າງວັດຖຸອຸປະກອນເຫຼົ່ານັ້ນ (ອາດກວມເອົາຜູ້ຂຽນບົດ, ສິນລະປິນແຕ້ມພາບປະກອບ ຫຼື ນັກຖ່າຍຮູບ ແລະ ຜູ້ສ້າງໜັງ). ຜູ້ຄົນເຫຼົ່ານີ້ ອາດເຂົ້າໃຈ ແລະ ສາມາດນຳສະເໜີພາກທິດສະດີຕ່າງໆ ຂອງການສຶກສາຮຽນຮ່ວມໄດ້ຢ່າງຈະແຈ້ງ , ແຕ່ວ່າຂາດປະສົບການພາກປະຕິບັດ ເພື່ອນຳມາເສີມສ້າງໃນເວລາອະທິບາຍ ກ່ຽວກັບ ວິທີການຈັດຕັ້ງປະຕິບັດການສຶກສາຮຽນຮ່ວມ. ໃນລັກສະນະດຽວກັນນັ້ນ ບັນດາຜູ້ທີ່ມີປະສົບການພາກປະຕິບັດ ກ່ຽວກັບ ການສຶກສາຮຽນຮ່ວມ (ຜູ້ອຳນວຍການ, ຄູສອນ, ຜູ້ປົກຄອງ, ນັກຮຽນ, ຜູ້ຕາງໜ້າກຸ່ມຊົນເຜົ່າ ແລະ ອື່ນໆ) ແມ່ນມີໂອກາດໜ້ອຍ ທີ່ຈະໄດ້ເຂົ້າຮ່ວມຂະບວນການການວາງແຜນ, ສ້າງ ຫຼື ກວດແກ້ວັດຖຸອຸປະກອນການສ້າງຄູ.

**ຄຳຖາມຕ່າງໆ ທີ່ທ່ານສາມາດຖາມ ເພື່ອຊ່ວຍວິເຄາະສະຖານະພາບໃນສະພາບການຂອງທ່ານ:**

- ແມ່ນໃຜເປັນຜູ້ຮັບຜິດຊອບ ສຳລັບ ການວາງແຜນ, ການຂຽນ, ການກວດແກ້ ແລະ ການທົບທວນ ວັດຖຸອຸປະກອນການສ້າງຄູ ເພື່ອນຳໃຊ້ເຂົ້າໃນການສ້າງຄູ? ພວກເຂົາຖືກເບິ່ງໂຕ ແລະ ຄັດເລືອກມາຄືແນວໃດ? ພວກເຂົາເປັນຜູ້ຕາງໜ້າໃຫ້ກຸ່ມຄົນທີ່ຫຼາກຫຼາຍໃນປະເທດນັ້ນບໍ?
- ຜູ້ສ້າງວັດຖຸອຸປະກອນການສ້າງຄູ ມີປະສົບການພາກປະຕິບັດຫຼາຍເທົ່າໃດ ຫຼື ມີປະສົບການປະເພດໃດ ໃນການສຶກສາຮຽນຮ່ວມ?
- ມີລະບົບໃດແດ່ ເພື່ອຊ່ວຍຜູ້ສ້າງວັດຖຸອຸປະກອນໃນການຊອກຫາ ແລະ ນຳໃຊ້ຕົວຢ່າງໃນພາກປະຕິບັດ ທີ່ສອດຄ່ອງກັບສະພາບການຂອງ ການສຶກສາຮຽນຮ່ວມ ຈາກປະເທດຂອງພວກເຂົາ ແລະ ຈາກປະເທດອື່ນໆທີ່ມີການປະຕິບັດຢ່າງຈິງຈັງ?
- ມີຂະບວນການຫຍັງແດ່ ເພື່ອກຳນົດ, ທົບທວນ ແລະ ຄັດເລືອກ ວັດຖຸອຸປະກອນທີ່ສ້າງມາຈາກພາຍນອກ ແລະ ເພື່ອຮັບປະກັນວ່າ ວັດຖຸອຸປະກອນນັ້ນໄດ້ເນັ້ນໜັກໃສ່ພາກປະຕິບັດທີ່ກ່ຽວຂ້ອງ?
- ບັນດາພາກສ່ວນທີ່ກ່ຽວຂ້ອງກັບການສຶກສາ ມີພາລະບົດບາດໃນການສ້າງວັດຖຸອຸປະກອນການສ້າງຄູ ສຳລັບການສຶກສາຮຽນຮ່ວມບໍ? ຖ້າມີ, ພວກເຂົາປະກອບພາລະບົດບາດນັ້ນຄືແນວໃດ ໃນການວາງແຜນ, ຂຽນ, ອອກແບບ ຫຼື ທົບທວນຂະບວນການສ້າງນັ້ນ?

---

[3] ບັນດາອົງການຕ່າງໆ ເຊັ່ນວ່າ ຕາໜ່າງຊ່ວຍເຫຼືອການສຶກສາ (EENET) ກຳລັງດຳເນີນວຽກງານ ເພື່ອສະໜັບສະໜູນພາກສ່ວນກ່ຽວຂ້ອງກັບການສຶກສາ ໃຫ້ບັນທຶກ ແລະ ແລກປ່ຽນ ປະສົບການພາກປະຕິບັດຂອງພວກເຂົາ ກ່ຽວກັບ ການສຶກສາຮຽນຮ່ວມ: www.eenet.org.uk.

# ເປົ້າໝາຍຂອງການໂຄສະນາສົ່ງເສີມ

ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 4

> *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງມີ ແລະ ກວມເອົາ ຫຼາຍຕົວຢ່າງຂອງການປະຕິບັດໃນຊີວິດຈິງ ສຳລັບການສຶກສາຮຽນຮ່ວມໃນສະຖານທີ່ການສຶກສາຕ່າງໆ".*

ດັ່ງທີ່ພວກເຮົາໄດ້ເຫັນໃນ *ປື້ມຄູ່ມືເຫຼັ້ມ 3*, ຫຼັກສູດສ້າງຄູ ຈຳເປັນຕ້ອງຊ່ວຍນັກຮຽນຄູໃຫ້ມີປະສົບການແບບມີສ່ວນຮ່ວມໂດຍກົງໃຫ້ຫຼາຍຖ້າວ່າຢາກໃຫ້ພວກເຂົາເຂົ້າໃຈກ່ຽວກັບການສຶກສາຮຽນຮ່ວມ, ມີທັກສະ ແລະ ຄວາມໝັ້ນໃຈໃນການຈັດຕັ້ງປະຕິບັດຢູ່ໃນສະຖານທີ່ການສຶກສາໃນຊີວິດຈິງ. ພາກປະຕິບັດ ຂອງການສ້າງຄູຍັງມີຄວາມສຳຄັນຫຼາຍ ໃນເວລາທີ່ນັກຮຽນຄູກຽມຕົວເຂົ້າເຮັດວຽກຢູ່ໃນໂຮງຮຽນ ທີ່ນຳໃຊ້ວິທີການສອນຫ້ອງຄວບ ເຊິ່ງບັນດານັກຮຽນຄູ ຈຳເປັນຕ້ອງສາມາດຕອບສະໜອງກັບຄວາມຕ້ອງການຮຽນຮູ້ຂອງກຸ່ມນັກຮຽນ ທີ່ມີອາຍຸແຕກຕ່າງກັນ. ຍ້ອນແນວນັ້ນ, ວັດຖຸອຸປະກອນທີ່ນຳໃຊ້ເພື່ອການກະກຽມຂອງນັກຮຽນຄູ ຈຳເປັນຕ້ອງເນັ້ນໜັກໃສ່ພາກປະຕິບັດ.

ອຸປະກອນການຮຽນ-ການສອນສຳລັບການສ້າງຄູຈຳເປັນຕ້ອງ:

ກ) ມີຕົວຢ່າງຂອງການປະຕິບັດ ແລະ ກໍລະນີສຶກສາ ເພື່ອວ່ານັກຮຽນຄູຈະສາມາດເຫັນໄດ້ວ່າຄົນອື່ນໆເຮັດແນວໃດ ເພື່ອຈັດການກັບບັນຫາທ້າທາຍໃນຊີວິດຈິງ ໃນສະຖານທີ່ການສຶກສາຕ່າງໆ ແລະ ສາມາດພິຈາລະນາ ນຳໃຊ້ແນວຄວາມຄິດນັ້ນ ມາປັບໃຊ້ເຂົ້າກັບວຽກງານໃນແວດລ້ອມຂອງພວກເຂົາເຈົ້າເອງ;

ຂ) ຊ່ວຍນັກຮຽນຄູໃນກິດຈະກຳພາກປະຕິບັດຂອງພວກເຂົາ ໂດຍການໃຫ້ຄຳແນະນຳ, ລາຍການກວດກາ ແລະອື່ນໆ.

ເພື່ອບັນລຸໄດ້ນັ້ນ, ສິ່ງສຳຄັນຈຳເປັນຕ້ອງມີຂະບວນການນຳໃຊ້ ຕົວຢ່າງຕ່າງໆ ຂອງການສຶກສາຮຽນຮ່ວມເຂົ້າໃນການກະທຳຕົວຈິງ ເຊິ່ງບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ ແລະ ຄູໃນສະຖາບັນສ້າງຄູສາມາດນຳໃຊ້ໄດ້ໃນເວລາສ້າງວັດຖຸອຸປະກອນ. ສິ່ງດັ່ງກ່າວນີ້ ຮຽກຮ້ອງເຖິງການສະໜັບສະໜູນຈາກບັນດາພາກສ່ວນຕ່າງໆ ທີ່ກ່ຽວຂ້ອງກັບການສຶກສາໃນການບັນທຶກ ແລະ ແລກປ່ຽນປະສົບການໃນພາກປະຕິບັດຂອງພວກເຂົາເຈົ້າເຊິ່ງມີຫຼາຍຕົວຢ່າງ ຂອງໂຄງການການສຶກສາຮຽນຮ່ວມທີ່ໄດ້ບັນທຶກໄວ້ແລ້ວ ກ່ຽວກັບປະສົບການຂອງໂຄງການເຫຼົ່ານັ້ນ (ແຕ່ກໍມີຫຼາຍໂຄງການທີ່ບໍ່ໄດ້ຖືກບັນທຶກໄວ້). ແຕ່ວ່າ ມັນມີຄວາມຈຳເປັນ ຕ້ອງມີການດຳເນີນງານຮ່ວມກັນ ເພື່ອໃຫ້ໂຮງຮຽນ ຫຼື ໂຄງການການສຶກສາບັນທຶກປະສົບການ ການສຶກສາຮຽນຮ່ວມຂອງພວກເຂົາເຈົ້າໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າ ແລະ ປະສົບການທີ່ໄດ້ບັນທຶກໄວ້ນັ້ນ ຖືກນຳໃຊ້ໃນແຜນງານສ້າງຄູໂດຍກົງ ແລະ ເປັນປະຈຳ. ນອກຈາກນີ້ແລ້ວ, ກໍລະນີສຶກສາທີ່ອີງຕາມການສຶກສາເອກະສານ, ການບັນທຶກສຽງ, ຮູບພາບ ແລະ ວີດີໂອ ກໍເປັນຊ່ອງທາງສຳຄັນທີ່ເປັນການສົ່ງເສີມ ແລະ ສາມາດເຂົ້າເຖິງໄດ້ ເພື່ອບັນທຶກ ແລະ ແລກປ່ຽນປະສົບການຕ່າງໆ.

**ກໍລະນີສຶກສາຈາກ ສ.ປ.ປ ລາວ, ວິທະຍາໄລຄູດົງຄຳຊ້າງ**

***ຫົວຂໍ້: ການສະໜອງການສຶກສາແກ່ເດັກທີ່ດ້ອຍໂອກາດ***

ເພື່ອເປັນການສະໜອງການສຶກສາໃຫ້ແກ່ກຸ່ມເດັກດ້ອຍໂອກາດ ໃນສົກຮຽນ 2004-2005, ວິທະຍາໄລຄູດົງຄຳຊ້າງ ໄດ້ຮັບນັກຮຽນຄູທີ່ພິການທາງສາຍຕາ (ຕາບອດ) ເຂົ້າຮຽນວິຊາຄູ ຈຳນວນ 3 ນ້ອງ ເປັນຍິງ 1 ນ້ອງ, ຊາຍ 2 ນ້ອງ ຮຽນລະບົບ 11+1 ສາຍຄູປະຖົມພາກປົກກະຕິໄລຍະເວລາ 1 ສົກຮຽນ. ໃນໄລຍະຮັບນັກຮຽນຄູທີ່ພິການທາງສາຍຕາເຂົ້າມາຮຽນຮ່ວມກັບນັກຮຽນປົກກະຕິຢູ່ໃນວິທະຍາໄລຄູດົງຄຳຊ້າງຄັ້ງທຳອິດ ນັ້ນກໍເຫັນວ່າບໍ່ເປັນບັນຫາຫຍຸ້ງຍາກເກີນໄປກ່ຽວກັບການສິດສອນ ເພາະວ່ານັກຮຽນທີ່ເຂົ້າມາຮຽນແມ່ນໄດ້ຜ່ານການຝຶກທັກສະທາງດ້ານຕ່າງໆ ຈາກສູນການແພດຟື້ນຟູໜ້າທີ່ການມາກ່ອນ ແລ້ວ. ນັບແຕ່ສົກຮຽນ 2013-2014 ມີນັກຮຽນຄູທີ່ເປັນຄົນພິການຕາໄດ້ສຳເລັດການສຶກສາ ດ້ານວິຊາຊີບຄູສາຍຄູປະຖົມຈຳນວນ 15 ນ້ອງ, ຍິງ 6 ນ້ອງ, ຊາຍ 9 ນ້ອງ.

ນັກຮຽນຄູທີ່ເປັນຄົນພິການ ໄດ້ສຳເລັດການສຶກສາແລ້ວ ໄດ້ປະກອບສ່ວນເຂົ້າໃນວຽກງານການສິດສອນຕົວຈິງຢູ່ໃນສູນການແພດຟື້ນຟູໜ້າທີ່ການ, ໂຮງຮຽນສອນຄົນຕາບອດທົ່ງປົ່ງ ແລະ ສະຖານທີ່ອື່ນໆ

ນັກຮຽນຄູທີ່ຮຽນຈົບເປັນຄູແລ້ວກໍ່ໄດ້ນຳໃຊ້ສື່ການຮຽນການສອນທີ່ເປັນວັດຖຸອຸປະກອນຕ່າງໆ ທີ່ເປັນຂອງຈິງ ແລະ ຂອງຈຳລອງທີ່ມີຢູ່ຕາມທ້ອງຖິ່ນເຂົ້າໃນວຽກງານການສິດສອນຕົວຈິງ. ສະນັ້ນ, ໃນສະຖາບັນຈຶ່ງມີແຜນການສືບຕໍ່ຜະລິດສື່ທີ່ຫາໄດ້ງ່າຍໃນທ້ອງຖິ່ນມາປະກອບເຂົ້າໃນການສອນເພື່ອເຮັດໃຫ້ນັກຮຽນເຂົ້າໃຈງ່າຍຂຶ້ນໄປຄຽງຄູ່ກັບການສອນທາງດ້ານທິດສະດີອີກດ້ວຍ.



© DTE, MOES, Lao PDR

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 5

*"ພາກສ່ວນກ່ຽວຂ້ອງຈໍາເປັນຕ້ອງມີບົດບາດໜັກແໜ້ນກວ່າເກົ່າໃນການປະກອບ ແລະ ທົບທວນເນື້ອໃນທີ່ກ່ຽວຂ້ອງກັບການສຶກສາຮຽນຮ່ວມໃນວັດຖຸອຸປະກອນການສ້າງຄູ."*

ພາກສ່ວນກ່ຽວຂ້ອງຈໍາເປັນຕ້ອງໄດ້ເຂົ້າຮ່ວມໂດຍກົງ ໃນຂະບວນການສ້າງວັດຖຸອຸປະກອນການສ້າງຄູໃຫ້ຫຼາຍຂຶ້ນກວ່າເກົ່າ (ດັ່ງທີ່ພວກເຮົາໄດ້ເຫັນໃນ ປື້ມຄູ່ມືເຫຼັ້ມ 3 ທີ່ວ່າ ພາກສ່ວນກ່ຽວຂ້ອງຕ້ອງໄດ້ເຂົ້າຮ່ວມໃນ ຂະບວນການສ້າງຫຼັກສູດ). ຄວນປຶກສາຫາລືກັບ ຄູ, ຜູ້ປົກຄອງ, ນັກຮຽນ, ຜູ້ຕາງໜ້າຈາກກຸ່ມດ້ອຍໂອກາດ ແລະ ອື່ນໆ ໃນເວລາດໍາເນີນການວາງແຜນ, ການຂຽນ ແລະ ການອອກແບບ ວັດຖຸອຸປະກອນການສ້າງຄູ. ຄູປະຈໍາການນັ້ນ ສາມາດອອກຄວາມຄິດເຫັນຂອງຕົວເອງກ່ຽວກັບການນໍາໃຊ້ວັດຖຸອຸປະກອນນັ້ນໃນພາກປະຕິບັດ, ພ້ອມດຽວກັນນັ້ນ ບັນດາພາກສ່ວນກ່ຽວຂອງຕ່າງໆສາມາດແລກປ່ຽນຄວາມຄິດໃນສິ່ງທີ່ພວກເຂົາເຈົ້າຄິດວ່າຄູ ຈໍາເປັນຕ້ອງຮູ້ ຫຼື ຕ້ອງເຮັດ ແລະ ຕົວຢ່າງດ້ານບວກ ຫຼື ດ້ານລົບຈາກປະສົບການຂອງພວກເຂົາເຈົ້າສາມາດຊີ້ນໍາຄູ ກ່ຽວກັບສິ່ງທີ່ຄວນເຮັດ ແລະ ສິ່ງທີ່ຄວນຫຼີກເວັ້ນ.

### ຕົວຢ່າງຈາກປະເທດຊໍາເບຍ

### *ຄູ ສ້າງວັດຖຸອຸປະກອນ ເພື່ອນໍາໃຊ້ເຂົ້າໃນການສ້າງຄູຄົນອື່ນໆ*

ຕົວຢ່າງນີ້ ສະແດງໃຫ້ເຫັນເຖິງຄວາມພະຍາຍາມໃນການຊ່ວຍພາກສ່ວນກ່ຽວຂ້ອງກັບການສຶກສາໃຫ້ພິຈາລະນາ, ບັນທຶກ ແລະ ຈັດພິມປະສົບການໃນພາກປະຕິບັດຂອງພວກເຂົາເຈົ້າ ກ່ຽວກັບການພັດທະນາການສຶກສາຮຽນຮ່ວມ. ກຸ່ມໂຮງຮຽນໃນເມືອງ Mpika ຂອງປະເທດຊໍາເບຍ ໄດ້ເຂົ້າຮ່ວມໃນໂຄງການຄົ້ນຄວ້າທີ່ ລິເລີ່ມໂດຍຕາໜ່າງຊ່ວຍເຫຼືອການສຶກສາ (EENET). ໂຄງການນີ້ ໄດ້ພະຍາຍາມທົດລອງວິທີທາງຕ່າງໆ ສໍາລັບ ຄູປະຈໍາການໃຫ້ກາຍມາເປັນຜູ້ປະຕິບັດວຽກງານທີ່ມີການຄົ້ນຄິດຫຼາຍກວ່າເກົ່າ, ສາມາດເຂົ້າໃຈ ແລະ ບັນທຶກພາກປະຕິບັດໄດ້ດີກວ່າເກົ່າ (ແລະ ການປ່ຽນແປງຕ່າງໆທີ່ພວກເຂົາເຈົ້າໄດ້ເຮັດໃນພາກປະຕິບັດນັ້ນ) ໃຫ້ມີປະສິດທິພາບຫຼາຍກວ່າເກົ່າ. ໃນໂຄງການນີ້, ຄູໄດ້ເຂົ້າຮ່ວມແລ້ວໃນແຜນງານຕ່າງໆ ເພື່ອເຮັດໃຫ້ໂຮງຮຽນຂອງພວກເຂົາເຈົ້າມີສ່ວນຮ່ວມຫຼາຍຂຶ້ນ ແລະ ເພື່ອປັບປຸງຄຸນນະພາບຂອງການຮຽນ-ການສອນ, ແຕ່ວ່າ ປະສົບການຂອງພວກເຂົາເຈົ້າບໍ່ໄດ້ຖືກບັນທຶກໄວ້ ສໍາລັບ ຜູ້ສົນໃຈໃນວົງກວ້າງ ແລະ ບໍ່ໄດ້ເກີດຜົນປະໂຫຍດແທ້ຈິງ ສໍາລັບ ຄູ ຫຼື ນັກຮຽນຄູຄົນອື່ນໆ. ໂດຍຜ່ານ ບັນດາກິດຈະກໍາວິໃຈພາກປະຕິບັດ (ກອງປະຊຸມສໍາມະນາ, ການສໍາພາດ, ການສົນທະນາກຸ່ມ, ແລະ ອື່ນໆ) ເຊິ່ງມີຜູ້ອໍານວຍສະດວກຈາກພາຍນອກ ແລະ ຈາກທ້ອງຖິ່ນ, ບັນດາຄູ ຈະເລີ່ມສ້າງກໍລະນີສຶກສາທີ່ອະທິບາຍເຖິງ ການສຶກສາຕ່າງໆທີ່ໄດ້ປະຕິບັດຜ່ານມາ ແລະ ການກະທໍາຕ່າງໆ ທີ່ພວກເຂົາເຈົ້າໄດ້ປະຕິບັດ ເພື່ອແກ້ໄຂບັນຫາທ້າທາຍຕ່າງໆຂອງການຮຽນຮ່ວມ ແລະ ການແຍກຮຽນ. ຜູ້ອໍານວຍຄວາມສະດວກໃນການເຮັດການວິໄຈພາກປະຕິບັດຂັ້ນທ້ອງຖິ່ນຂອງພວກເຂົາເຈົ້າ ໄດ້ສົ່ງກໍລະນີສຶກສາຈໍານວນຫຼາຍໃຫ້ EENET ເພື່ອການຈັດພິມ. ໃນເບື້ອງຕົ້ນ, ກໍລະນີສຶກສາສ່ວນຫຼາຍ ປາກົດວ່າບໍ່ມີຄວາມເໝາະສົມສໍາລັບການຈັດພິມ. ແຕ່ເຖິງຢ່າງໃດກໍຕາມ, ໂດຍຜ່ານທາງຂະບວນການຂອງການເຈລະຈາກັບບັນດາຄູຕ່າງໆ ຜ່ານທາງຜູ້ອໍານວຍຄວາມສະດວກຂັ້ນທ້ອງຖິ່ນຂອງພວກເຂົາເຈົ້າ ຈຶ່ງໄດ້ຮັບຄວາມຈະແຈ້ງກ່ຽວກັບປະເດັນທີ່ສັບສົນ ແລະ ກໍໄດ້ສະໜອງຂໍ້ມູນທີ່ຂາດຫາຍໄປນັ້ນ.

ກໍລະນີສຶກສານີ້ໄດ້ຈັດພິມໃນປຶ້ມເຫຼັ້ມໜຶ່ງ ຊື່ວ່າ ການຄົ້ນຄວ້າປະສົບການຂອງພວກເຂົາເຈົ້າ.[4] ໃນຕໍ່ມາ ບັນດາຄູທີ່ໄດ້ເຂົ້າຮ່ວມນັ້ນໄດ້ສະເໜີໃຫ້ຄູໃໝ່ທຸກຄົນທີ່ເຂົ້າຮ່ວມຢູ່ໃນໂຮງຮຽນໃຫ້ອ່ານປຶ້ມນັ້ນ ເພື່ອວ່າ ພວກເຂົາເຈົ້າອາດຈະສາມາດແລກປ່ຽນປະສົບການຂອງໂຮງຮຽນໃນໄລຍະຜ່ານມາ.

# ບັນຫາທ້າທາຍ 3

## ຄວາມຍືດຍຸ່ນໃນການສ້າງ ແລະ ການນໍາໃຊ້ວັດຖຸອຸປະກອນ

### ການວິເຄາະສະພາບການ

ດັ່ງທີ່ພວກເຮົາໄດ້ເຫັນໃນຂ້າງເທິງນັ້ນແລ້ວ, ວັດຖຸອຸປະກອນທີ່ນໍາໃຊ້ເພື່ອການສຶກສາຂອງນັກຮຽນຄູ ກ່ຽວກັບ ການສຶກສາຮຽນຮ່ວມມັກຈະບໍ່ໄດ້ຮັບການປັບປຸງໄດ້ທັນສະພາບການ, ບໍ່ມີພາກປະຕິບັດ ຫຼື ບໍ່ມີປະສົບການຈາກຊີວິດຈິງ. ວັດຖຸອຸປະກອນເຫຼົ່ານີ້ອາດບໍ່ສາມາດຊ່ວຍນັກຮຽນຄູໃຫ້ເຂົ້າໃຈ, ຕອບສະໜອງ ແລະ ຕ້ອນຮັບຄວາມຫຼາກຫຼາຍຂອງນັກຮຽນທີ່ພວກເຂົາເຈົ້າພົບພໍ້ຢູ່ໃນສະຖານທີ່ສຶກສາ. ໃນເບື້ອງຕົ້ນແລ້ວ ວັດຖຸອຸປະກອນຕ່າງໆອາດຍັງບໍ່ໄດ້ຖືກສ້າງຂຶ້ນມາ ເພື່ອນໍາໃຊ້ໃນປະເທດອື່ນ.

ອີກບັນຫາໜຶ່ງ ເຊິ່ງອາດສະທ້ອນໃຫ້ເຫັນເຖິງສະພາບ ຂອງວັດຖຸອຸປະກອນການຮຽນ-ການສອນໃນທົ່ວທຸກຂັ້ນຂອງລະບົບການສຶກສາ ກໍຄື ບັນດາວັດຖຸອຸກອນການສ້າງຄູອາດແຂງກະດ້າງ ແລະ ກໍານົດຕາຍຕົວໂພດ. ວັດຖຸອຸປະກອນການສ້າງຄູ ພ້ອມທັງປຶ້ມອ່ານຕ່າງໆ ທີ່ນໍາໃຊ້ເພື່ອສິດສອນເດັກມັກຈະມີຂໍ້ຄວາມດັດແກ້ ແລະ ກໍານົດກຸ່ມກິດຈະກໍາຕ່າງໆ. ເຊິ່ງອາດຈະຫຍຸ້ງຍາກ (ຫຼື ບາງເທື່ອກໍ່ເປັນໄປບໍ່ໄດ້) ສໍາລັບຄູໃນສະຖາບັນສ້າງຄູຈະໄດ້ປ່ຽນແປງ ຫຼື ດັດແກ້ວັດຖຸອຸປະກອນທີ່ໄດ້ອະນຸມັດແລ້ວ. ຫຼາຍປະເທດແມ່ນມີລະບົບການສອບເສັງທີ່ແຂງກະດ້າງ, ໝາຍຄວາມວ່າ ຄູໃນສະຖາບັນສ້າງຄູສາມາດປັບປ່ຽນໄດ້ໜ້ອຍດຽວໃນດ້ານການນໍາສະເໜີວັດຖຸອຸປະກອນ ທີ່ບໍ່ໄດ້ກໍານົດໄວ້ໃນຫຼັກສູດນັ້ນ.

ການຂາດຄວາມເປັນໄປໄດ້ໃນການປັບປ່ຽນນີ້ ອາດຈະເຮັດໃຫ້ໜັກໜ່ວງກວ່າເກົ່າ ສໍາລັບ ຄູໃນສະຖາບັນສ້າງຄູໃນການສ້າງນະວັດຕະກໍາໃໝ່ໃຫ້ວັດຖຸອຸປະກອນນັ້ນ ຫຼື ໃນການປັບປ່ຽນວັດຖຸອຸປະກອນທີ່ບໍ່ໄດ້ຜະລິດໃນທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບ ສະພາບການ ແລະ ຄວາມຕ້ອງການຂອງນັກຮຽນຄູຂອງພວກເຂົາເຈົ້າ. ວັດຖຸອຸປະກອນ ທີ່ສາມາດປັບປ່ຽນໄດ້ອາດເຮັດໃຫ້ມັນມີຄວາມຫຍຸ້ງຍາກຫຼາຍກວ່າເກົ່າ ສໍາລັບຄູໃນສະຖາບັນສ້າງຄູໃນການນໍາໃຊ້ວິທີ ການຮຽນ-ການສອນ ແບບຕັ້ງໜ້າ ແລະ ແບບ ເອົານັກຮຽນເປັນໃຈກາງ ໂດຍສະເພາະແມ່ນ ຖ້າວ່າ ຄູໃນສະຖາບັນສ້າງຄູນັ້ນຫາກຂາດປະສົບການ ຫຼື ທັກສະໃນການສິດສອນໃນວິທີທາງທີ່ສາມາດຍືດຍຸ່ນໄດ້ ແລະ ຕອບສະໜອງໄດ້.

ດັ່ງນັ້ນ, ຈຶ່ງມັກເກີດມີຂໍ້ຂັດແຍ່ງພື້ນຖານໃນຫຼາຍລະບົບການສ້າງຄູ ກໍຄື ບັນດານັກຮຽນຄູຄວນຈະໄດ້ຮຽນຮູ້ ກ່ຽວກັບການສຶກສາຮຽນຮ່ວມ, ແຕ່ວ່າວັດຖຸອຸປະກອນ (ພ້ອມທັງຫຼັກສູດ ແລະ ວິທີການສິດສອນ) ທີ່ພວກເຂົາເຈົ້າໄດ້ຮຽນຮູ້ ໃນຂະນະເວລາກໍ່ສ້າງຄູກ່ອນປະຈໍາການນັ້ນມັກຈະໄກຈາກການຮຽນຮ່ວມ.

---

[4] EENET. ປີ 2003. ການຄົ້ນຄວ້າ ກ່ຽວກັບປະສົບການຂອງພວກເຮົາ: ຊຸດເອກະສານຂອງຄູ ຈາກໂຮງຮຽນ Chitulika, ໂຮງຮຽນພື້ນຖານ Kabale, ໂຮງຮຽນພື້ນຖານ Mpika, ໂຮງຮຽນພື້ນຖານ Musakanya, ແລະໂຮງຮຽນພື້ນຖານ Nyanji Middle ໃນເມືອງ Mpika, ປະເທດຊໍາເບຍ. Manchester. EENET, http://www.eenet.org.uk/ resources/docs/rsrching_experience.pdf (ເຂົ້າເບິ່ງໃນວັນທີ 17 ເມສາ 2013.)

ຄໍາຖາມຕ່າງໆ ທີ່ທ່ານສາມາດຖາມ ເພື່ອຊ່ວຍວິເຄາະ ສະຖານະພາບ ໃນສະພາບການຂອງທ່ານ:

- ວັດຖຸອຸປະກອນຕ່າງໆ ທີ່ນໍາໃຊ້ໃນການສ້າງຄູ ສໍາລັບການສຶກສາຮຽນຮ່ວມໄດ້ຖືກທົບທວນຄືນບໍ່ ໃນຫວ່າງບໍ່ດົນມານີ້ ເພື່ອປະເມີນຄວາມງ່າຍໃນການນໍາໃຊ້ ແລະ ປັບປຸ່ງນສໍາລັບຄູໃນສະຖາບັນສ້າງຄູ?
- ຄູໃນສະຖາບັນສ້າງຄູມີຊ່ອງຫວ່າງບໍ ໃນການຕັດສິນໃຈດ້ວຍຕົວເອງກ່ຽວກັບວ່າ ຈະນໍາໃຊ້ວັດຖຸອຸປະກອນອັນໃດ, ໃນເວລາໃດ ແລະ ນໍາໃຊ້ຄືແນວໃດ (ພາຍໃນຂອບເຂດ ເພື່ອບັນລຸເປົ້າໝາຍຂອງການຮຽນຮູ້ຫຼັກສູດໃດໜຶ່ງ) ຫຼືວ່າ ມີຂໍ້ຫ້າມໃດບໍ ຕໍ່ກັບການນໍາໃຊ້ວັດຖຸອຸປະກອນຂອງຄູໃນສະຖາບັນສາງຄູ?
- ຄູໃນສະຖາບັນສ້າງຄູ ມີທັກສະ ແລະ ປະສົບການດີບໍ່ ເພື່ອການຕັດສິນໃຈ ກ່ຽວກັບການປັບເນື້ອໃນ ແລະ ວິທີການທີ່ພວກເຂົາເຈົ້ານໍາໃຊ້ວັດຖຸອຸປະກອນການສ້າງຄູ?

# ເປົ້າໝາຍຂອງການໂຄສະນາສົ່ງເສີມ

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 6

*"ຄູໃນສະຖາບັນສ້າງຄູ ຈໍາເປັນຕ້ອງໄດ້ຮັບອິດສະລະ ແລະ ທັກສະໃນການຄັດເລືອກ, ປັບປຸ່ງນ ແລະ ນໍາໃຊ້ ວັດຖຸອຸປະກອນການສ້າງຄູ ໃນລັກສະນະທີ່ສາມາດປັບປຸ່ງນໄດ້."*

ການສຶກສາຮຽນຮ່ວມ ດັ່ງທີ່ພວກເຮົາໄດ້ເຫັນໃນປື້ມຄູ່ມືເຫຼັ້ມທີ 1 ນັ້ນ ແມ່ນຂະບວນການໃດໜຶ່ງຂອງການປ່ຽນແປງ, ການແກ້ໄຂບັນຫາ ແລະ ການຄົ້ນຫາປະສົບການ. ສະນັ້ນ, ເພື່ອສ້າງຄູໃຫ້ສາມາດຈັດຕັ້ງປະຕິບັດການສຶກສາຮຽນຮ່ວມໃຫ້ມີປະສິດທິພາບນັ້ນ, ພວກເຮົາຕ້ອງການຫຼັກສູດໃດໜຶ່ງທີ່ອໍານວຍຄວາມສະດວກ ແລະ ສະແດງໃຫ້ເຫັນເຖິງວິທີການຮຽນ-ການສອນທີ່ສາມາດປັບປຸ່ງນໄດ້ (ໃຫ້ເບິ່ງ ປື້ມຄູ່ມືເຫຼັ້ມທີ 3). ແຕ່ວ່າ ສິ່ງດັ່ງກາວນີ້ ຕ້ອງໄດ້ຮັບການສະໜັບສະໜູນຈາກວັດຖຸອຸປະກອນທີ່ສາມາດປັບປຸ່ງນໄດ້ ເພື່ອໃຫ້ສອດຄ່ອງກັບສະພາບການຂອງທ້ອງຖິ່ນ ແລະ ຄວາມຕ້ອງການພິເສດຂອງນັກຮຽນຄູ.

ເວົ້າລວມແລ້ວ ບໍ່ມີວັດຖຸອຸປະກອນການສ້າງຄູ ກ່ຽວກັບການສຶກສາຮຽນຮ່ວມທັງໝົດທີ່ຈະສົມບູນພຽບພ້ອມ. ບໍ່ແມ່ນທຸກລັດຖະບານ ຫຼື ທຸກສະຖາບັນສ້າງຄູຈະມີແຫຼ່ງຊັບພະຍາກອນ ເພື່ອລິເລີ່ມການທົບທວນວັດຖຸອຸປະກອນສ້າງຄູແບບໄວ ແລະ ຂະໜາດໃຫຍ່ ເພື່ອໃຫ້ວັດຖຸອຸປະກອນເຫຼົ່ານັ້ນພິຈາລະນາເຖິງການສຶກສາຮຽນຮ່ວມຢ່າງເໝາະສົມ. ສະນັ້ນ, ສິ່ງທີ່ສໍາຄັນແມ່ນ ຄູໃນສະຖາບັນສ້າງຄູຈໍາເປັນຕ້ອງມີທັກສະ ແລະ ມີອິດສະລະໃນການຊອກຫາ ແລະ ທົດລອງວັດຖຸອຸປະກອນໃໝ່ໆ ເພື່ອນໍາມາໃຊ້ສ້າງວັດຖຸອຸປະກອນຂອງພວກເຂົາເຈົ້າເອງ ຫຼື ເພື່ອປັບປຸ່ງນວັດຖຸອຸປະກອນທີ່ມີຢູ່ແລ້ວ. ຄູໃນສະຖາບັນສ້າງຄູຍັງຕ້ອງໄດ້ຮັບການຊ່ວຍເຫຼືອ (ເຊິ່ງກັນ ແລະ ກັນ ແລະ/ຫຼື ຈາກທີ່ປຶກສາຜູ້ທີ່ມີປະສົບການ) ເພື່ອວ່າພວກເຂົາເຈົ້າຈະສາມາດແລກປ່ຽນປະສົບການໃນການຊອກຫາ, ສ້າງ ແລະ ປັບປຸງວັດຖຸອຸປະກອນສ້າງຄູ (ປະເດັນນີ້ ຈະໄດ້ສົນທະນາເພີ້ມຕື່ມໃນ ປື້ມຄູ່ມືເຫຼັ້ມທີ 5 - ວິທີສິດສອນ).

ໃນຫຼາຍສະພາບແວດລ້ອມ, ການໃຫ້ອິດສະລະເຊັ່ນນີ້ ກັບຄູໃນສະຖາບັນສ້າງຄູ ແລະ ການສ້າງທັກສະ ແລະ ການສະໜັບສະໜູນໃຫ້ແກ່ພວກເຂົາເຈົ້າຮຽກຮ້ອງໃຫ້ມີການປ່ຽນແປງນະໂຍບາຍຈໍານວນຫຼວງຫຼາຍ ເຊັ່ນວ່າ: ການເຄື່ອນຍ້າຍຫຼັກສູດສ້າງຄູ ແລະ ຊຸດວັດຖຸອຸປະກອນຈາກການສັ່ງການ ຫຼື ຈາກການກໍານົດຕາຍຕົວຈາກຂັ້ນສູນກາງ.

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 7

*"ວັດຖຸອຸປະກອນການສ້າງຄູ ຈຳເປັນຕ້ອງສະທ້ອນໃຫ້ເຫັນເຖິງ ການປະຕິບັດແບບຮຽນຮ່ວມ ເພື່ອຊ່ວຍຄູໃນສະຖາບັນສ້າງຄູໃໃນການສ້າງຕົວແບບຂອງການປະຕິບັດການຮຽນຮ່ວມ ໃນການເຮັດວຽກຂອງພວກເຂົາເຈົ້າ ກັບນັກຮຽນຄູ."*

ວັດຖຸອຸປະກອນການຮຽນ-ການສອນ ສຳລັບ ນຳໃຊ້ເຂົ້າໃນການສ້າງຄູຈຳເປັນຕ້ອງຖືກອອກແບບມາເພື່ອ:

- ສົ່ງເສີມ ການຄົ້ນຄິດວິຈານ, ຄວາມເປັນເອກະລາດຂອງນັກຮຽນຄູ ແລະ ຄູໃນສະຖາບັນສ້າງຄູ.
- ໃຫ້ໂອກາດຄູໃນສະຖາບັນສ້າງຄູໃນການເລືອກ, ໃນການປັບປຸງ ຫຼື ປ່ຽນກິດຈະກຳ, ກຳລະນີສຶກສາ ແລະ ອື່ນໆ.
- ຊ່ວຍຄູໃນສະຖາບັນສ້າງຄູໃຫ້ນຳໃຊ້ເຕັກນິກຕ່າງໆ ເຊັ່ນວ່າ: ການຮຽນຮູ້ຈາກໝູ່ເພື່ອນ, ການສຶກສາດ້ວຍຕົນເອງ, ໂຄງການຮ່ວມມືເປັນທີມງານ ແລະ ອື່ນໆ.
- ຊີ້ນຳ ແລະ ສະໜັບສະໜູນຄູໃນສະຖາບັນສ້າງຄູໃຫ້ນຳໃຊ້ວິທີການນະວັດຕະກຳໃໝ່ ເພື່ອ ຕອບສະໜອງຕາມຄວາມຕ້ອງການຮຽນຮູ້ທີ່ຫຼາກຫຼາຍໃນວຽກງານທີ່ພວກເຂົາເຈົ້າອາດບໍ່ລຶ້ງເຄີຍຫຼາຍ.

ສິ່ງດັ່ງກ່າວນີ້ ຈຳເປັນຕ້ອງໃຫ້ເຊື່ອມຕໍ່ກັບວຽກງານ ເພື່ອໃຫ້ການສຶກສາທີ່ກ້າວໜ້າ ແລະ ການສະໜັບສະໜູນຄູໃນສະຖາບັນສ້າງຄູ, ພ້ອມທັງທົບທວນ ວິທີການສິດສອນຂອງພວກເຂົາ (ໃຫ້ເບິ່ງປື້ມຄູ່ມືເຫຼັ້ມທີ 5).

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 8

*"ວັດຖຸອຸປະກອນການສ້າງຄູ ຈຳເປັນຕ້ອງໃຫ້ຜູ້ທີ່ມີປະສົບການໂດຍກົງ ໃນດ້ານວິທີການຮຽນຮູ້ແບບຕັ້ງໜ້າ ແລະ ດ້ານການດັດປັບວັດຖຸອຸປະກອນເພື່ອໃຫ້ເປັນຜູ້ວາງແຜນ, ຂຽນ, ອອກແບບ ແລະ ທົບທວນ."*

ຜູ້ທີ່ຄັດເລືອກ ແລະ ສ້າງວັດຖຸອຸປະກອນການສ້າງຄູ ຈຳເປັນຕ້ອງເຂົ້າໃຈວິທີການຮຽນ-ການສອນແບບຕັ້ງໜ້າ, ແບບເອົານັກຮຽນເປັນໃຈກາງ ແລະ ແບບມີສ່ວນຮ່ວມ ແລະ ຈຳເປັນຕ້ອງເຂົ້າໃຈວ່າຄຸນນະພາບ ແລະ ເນື້ອໃນຂອງວັດຖຸອຸປະກອນທີ່ມີຢູ່ສາມາດຊ່ວຍ ຫຼື ຂັດຂວາງການນຳໃຊ້ວິທີການດັ່ງກ່າວນັ້ນ. ບັນດາຜູ້ສ້າງວັດຖຸອຸປະກອນ ຈຳເປັນຕ້ອງມີທັກສະພາກປະຕິບັດ ແລະ ປະສົບການກ່ຽວກັບການສິດສອນໃນລັກສະນະທີ່ສາມາດຍືດຍຸ່ນໄດ້ ແລະ ຕອບ ສະໜອງຕາມຄວາມຕ້ອງການ, ເພື່ອວ່າ ພວກເຂົາຈະສາມາດໃຫ້ຄຳແນະນຳ ແລະ ໃຫ້ການຊີ້ນຳພາກປະຕິບັດ ສຳລັບຄູໃນສະຖາບັນສ້າງຄູໂດຍຜ່ານທາງວັດຖຸອຸປະກອນການສ້າງຄູ.

# ບັນຫາທ້າທາຍ 4

## ການຫຼີກເວັ້ນ ວັດຖຸອຸປະກອນ ທີ່ບໍ່ແມ່ນການຮຽນຮ່ວມ

### ການວິເຄາະສະພາບການ

ດັ່ງທີ່ພວກເຮົາໄດ້ເຫັນໃນ *ປື້ມຄູ່ມືເຫຼັ້ມທີ 3*, ຫຼັກສູດການສ້າງຄູ (ແລະ ວັດຖຸອຸປະກອນ ທີ່ນຳໃຊ້ເພື່ອສອນຫຼັກສູດນັ້ນ) ອາດບໍ່ສາມາດແກ້ໄຂປະເດັນຮູບແບບທີ່ຕາຍຕົວ ແລະ ການຈຳແນກພາຍໃນການສ້າງຄູ ແລະ ໃນກຸ່ມຄູ. ວັດຖຸອຸປະກອນການສ້າງຄູ ສາມາດຊໍ້າເຕີມການເປັນຮູບແບບທີ່ຕາຍຕົວ ແລະ ການຈຳແນກທີ່ມີຢູ່ໃນທົ່ວໄປຂອງສັງຄົມ, ແລະ ສາມາດໄປໄກໄດ້ເຖິງ ການເຮັດໃຫ້ນັກຮຽນຄູຈຳນວນໜຶ່ງອອກຈາກຂະບວນການການຮໍ່າຮຽນໄດ້ ຍ້ອນຂໍ້ຄວາມທີ່ໄດ້ຖືກຖ່າຍທອດໃຫ້ ຫຼື ຍ້ອນພາສາ ແລະ ຮູບແບບທີ່ໄດ້ນຳໃຊ້ນັ້ນ.

*ມີການຮັບຮູ້ໜ້ອຍ ເຖິງຄວາມຫຼາກຫຼາຍທາງດ້ານພາສາຊົນເຜົ່າ ໃນສື່ອຸປະກອນການສ້າງຄູ*

ໃນທົ່ວພາກພື້ນອາຊີ ແລະ ປາຊີຟິກ, ການເນັ້ນໜັກໃສ່ການສຶກສາຫຼາຍພາສາທີ່ອີງຕາມ ພາສາແມ່ (MTB-MLE) ແມ່ນກຳລັງເພີ່ມຂຶ້ນເລື້ອຍໆ ແລະ ມີການຊ່ວຍເຫຼືອການສຶກສາພາສາແມ່ຢູ່ໃນໂຮງຮຽນຕ່າງໆ (ໃຫ້ເບິ່ງ ຕາຕະລາງຂໍ້ມູນຢູ່ໜ້າຕໍ່ໄປ ເພື່ອໃຫ້ໄດ້ຂໍ້ມູນເພີ່ມຕື່ມກ່ຽວກັບ MTB-MLE). ເຖິງຢ່າງໃດກໍຕາມ, ຫຼັກສູດ ແລະ ວັດຖຸອຸປະກອນການສ້າງຄູອາດຍັງບໍ່ທັນຮັບຮູ້ເຖິງຄວາມສຳຄັນຂອງຄວາມຫຼາກຫຼາຍທາງດ້ານພາສາ ແລະ ອາດບໍ່ສອນນັກຮຽນຄູ ໃຫ້ຈັດຕັ້ງປະຕິບັດວິທີການຕ່າງໆທີ່ນຳໃຊ້ພາສາຂອງນັກຮຽນເອງ. ໂດຍທົ່ວໄປແລ້ວ ກໍ່ຍັງຂາດການໃຫ້ຄວາມສຳຄັນ ກ່ຽວກັບ ພາສາ ແລະ ວັດທະນະທຳພາຍໃນວັດຖຸອຸປະກອນການສ້າງຄູກ່ອນປະຈຳການ. ສິ່ງດັ່ງກ່າວນີ້ຈຳກັດໂອກາດຂອງນັກຮຽນຄູໃນການສ້າງທັກສະເພື່ອໃຊ້ພາສາທ້ອງຖິ່ນ ແລະ ພາສາແຫ່ງຊາດໃນຫ້ອງຮຽນ.

ສ່ວນຫຼາຍແລ້ວ ຈະມີວັດຖຸອຸປະກອນການສ້າງຄູພຽງແຕ່ຈຳນວນໜ້ອຍດຽວເທົ່ານັ້ນທີ່ເປັນພາສາຊົນເຜົ່າ. ຍົກຕົວຢ່າງ: ການທົບທວນການສ້າງຄູໂດຍອີງການອຸຍເນັດສະໂກ ບາງກອກ ໄດ້ພົບເຫັນຢູ່ໃນປະເທດໜຶ່ງວ່າ, "...ປື້ມອ່ານສຳລັບການສ້າງຄູ ແມ່ນບໍ່ມີສະບັບທີ່ເປັນພາສາຂອງກຸ່ມຊົນເຜົ່າ" ແລະໃນອີກປະເທດໜຶ່ງໄດ້ພົບວ່າ"...ມີວັດຖຸ ອຸປະກອນຈຳນວນໜ້ອຍທີ່ສຸດທີ່ສ້າງຂຶ້ນເປັນພາສາອື່ນໆ ທີ່ບໍ່ແມ່ນພາສາຊົນເຜົ່າ ເຊິ່ງມີການນຳໃຊ້ໜ້ອຍຫຼາຍຢູ່ໃນບັນດາວິທະຍາໄລຄູສອນຫຼາຍ"[5]. ໃນບ່ອນທີ່ມີວັດຖຸອຸປະກອນທີ່ເປັນພາສາຊົນເຜົ່ານັ້ນ, ອາດຈະເປັນການແປໂດຍກົງຈາກວັດຖຸອຸປະກອນທີ່ມີຢູ່ແລ້ວ ແທນທີ່ຈະເປັນປື້ມທີ່ແປ ຫຼື ປັບປຸງໃຫ້ສອດຄ່ອງກັບສະພາບການທ້ອງຖິ່ນ ຫຼື ປື້ມທີ່ໄດ້ສ້າງຂຶ້ນມາສະເພາະການນຳໃຊ້ໃນພາສານັ້ນ.

ນັກຮຽນຄູທີ່ມາຈາກກຸ່ມພາສາຊົນເຜົ່າອາດພົບເຫັນວ່າ ພວກເຂົາເຈົ້າໄດ້ຖືກແຍກອອກຈາກຂະບວນການຂອງການຮຽນຮູ້ ຍ້ອນຂາດວັດຖຸອຸປະກອນທີ່ເປັນພາສາຂອງພວກເຂົາເຈົ້າ ແລະ ຍ້ອນຂາດການຮັບຮູ້ເຖິງພາສາ ແລະ ຄວາມຫຼາກຫຼາຍທາງດ້ານຊົນເຜົ່າໃນທົ່ວທັງຫຼັກສູດ ແລະ ວັດຖຸອຸປະກອນການສ້າງຄູ. ຍົກຕົວຢ່າງ: ວັດຖຸອຸປະກອນການສ້າງຄູ ອາດບໍ່ກ່າວເຖິງປະຊາຊົນຈາກ

---

[5] Forgacs, ປີ 2012, ໜ້າທີ 36.

ກຸ່ມຊົນເຜົ່າຢ່າງເທົ່າທຽມກັນ ຫຼື ອາດຝັງແໜ້ນຕົວຢ່າງຕາຍຕົວດ້ານລົບ. ໃນລັກສະນະດຽວກັນນັ້ນ, ວັດຖຸອຸປະກອນການສ້າງຄູ ຍັງອາດບໍ່ກ່າວເຖິງປະຊາຊົນຈາກເຂດຊົນນະບົດ ແລະ ເຂດເທດສະບານ ຢ່າງເທົ່າທຽມກັນ.

## ການສຶກສາຫຼາຍພາສາ ທີ່ອີງຕາມພາສາແມ່

ການສຶກສາຫຼາຍພາສາທີ່ອີງຕາມພາສາແມ່ (MTB-MLE) ແມ່ນແຜນງານຮໍ່າຮຽນພາສາ ແລະ ພັດທະນາຄວາມຮັບຮູ້ ຢ່າງມີໂຄງສ້າງລະອຽດ ເຊິ່ງເລີ່ມຕົ້ນດ້ວຍພາສາທີໜຶ່ງ ຫຼື ພາສາໃນບ້ານເກີດຂອງນັກຮຽນ. ສິ່ງນີ້ແມ່ນສາມາດຊ່ວຍນັກຮຽນໃນການສ້າງຄວາມຄ່ອງຕົວ ແລະ ຄວາມໝັ້ນໃຈໃນພາສາທາງການໃນໂຮງຮຽນ ແລະ ພາສາເພີ່ມຕື່ມຕາມການກໍານົດ ແລະ ສົ່ງເສີມນັກຮຽນໃຫ້ນໍາໃຊ້ ທັງພາສາຂອງພວກເຂົາເຈົ້າ ແລະ ພາສາທາງການ ເພື່ອບັນລຸການສຶກສາທີ່ມີຄຸນນະພາບ.

MTB-MLE ທີ່ເໝາະສົມ ແລະ ມີປະສິດທິພາບນັ້ນ ແມ່ນອີງຕາມສະພາບແວດລ້ອມຂອງເດັກທີ່ຮູ້ແລ້ວ ແລະ ສ້າງຂົວເຊື່ອມຕໍ່ກັບໂລກກວ້າງຢ່າງເປັນລະບົບ. ຖ້າໃຫ້ດີແທ້ນັ້ນ ແມ່ນຕ້ອງມີຄູຜູ້ທີ່ຮູ້ພາສາ ແລະ ວັດທະນະທໍາຂອງເດັກ ແລະ ທັງເປັນຄູຜູ້ທີ່ສາມາດປັບປຸງຫຼັກສູດ ແລະ ການສິດສອນຫຼັກສູດໄປສູ່ວິທີການທີ່ເອົານັກຮຽນເປັນໃຈກາງ. ເວລາໃດທາກຄູໄດ້ຮັບການຝຶກອົບຮົມຢ່າງຖືກຕ້ອງ ແລະ ສາມາດເຂົ້າເຖິງວັດຖຸອຸປະກອນ ທີ່ມີຄຸນນະພາບ ທັງເປັນພາສາທ້ອງຖິ່ນຂອງນັກຮຽນ ແລະ ພາສາທາງການ, ຂະບວນການ ແລະ ບາດກ້າວຕ່າງໆ ຂອງການສຶກພາສາກໍ່ຈະສາມາດປັບປຸງໄດ້. ເຖິງຢ່າງໃດກໍ່ຕາມ, ປະສົບການໃນອາຊີ ແລະ ປາຊີຟິກໄດ້ຊີ້ໃຫ້ເຫັນວ່າ ໃນເວລາທີ່ຄູຂາດການຝຶກອົບຮົມຢ່າງຖືກຕ້ອງ, ມີວັດຖຸອຸປະກອນ ການຮຽນ-ການສອນບໍ່ພຽງພໍ ແລະ ນັກຮຽນມີປະສົບການໜ້ອຍຕໍ່ກັບພາສາໃໝ່ຢູ່ນອກໂຮງຮຽນນັ້ນ, ຕ້ອງດໍາເນີນການແບບຄ່ອຍເປັນຄ່ອຍໄປ ເພື່ອວ່ານັກຮຽນ ຫຼື ຄູຈະບໍ່ໄດ້ຖືກວຽກທັບຖົມຫຼາຍໂພດ.

**ກໍລະນີສຶກສາຈາກ ສ.ປ.ປ ລາວ**

*ຫົວຂໍ້: ການນໍາໃຊ້ອຸປະກອນ ໃນການຮຽນ-ການສອນ ສໍາລັບເດັກຊົນເຜົ່າ*

ອົງການພັດທະນາເດັກລາວຍີ່ປຸ່ນ SVA ແມ່ນອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ເຊິ່ງໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າເຂົ້າໃນການພັດທະນາການສຶກສາຢູ່ສອງແຂວງພາກໃຕ້ຂອງລາວ ຄື: ແຂວງເຊກອງ ແລະ ແຂວງອັດຕະປື ໂດຍສະເພາະແມ່ນການດໍາເນີນໂຄງການຜະລິດອຸປະກອນຊ່ວຍໃນການຮຽນການສອນ, ການຝຶກອົບຮົມຄູປະຖົມ ແລະ ອະນຸບານລວມທັງການປຸກສ້າງໂຮງຮຽນສາທິດຢູ່ໃນບັນດາແຂວງດັ່ງກ່າວ. ອົງການພັດທະນາເດັກລາວ-ຍີ່ປຸ່ນໄດ້ລິເລີ່ມຄົ້ນຄວ້າວິທີການສອນພາສາລາວໃຫ້ເດັກຊົນເຜົ່າຢູ່ ແຂວງເຊກອງໃນຊຸມປີ 1990. ຜ່ານການຖອດຖອນບົດຮຽນຫຼາຍຄັ້ງເມື່ອອົງການ SVA ໄດ້ມາປະຕິບັດໂຄງການຢູ່ ແຂວງສາລະວັນຈົນຮອດປີ 2012 ກໍໄດ້ມີການລິເລີ່ມຜະລິດອຸປະກອນທີ່ເອີ້ນວ່າແຜ່ນພາບຕົວອັກສອນ. ອຸປະກອນດັ່ງກ່າວເປັນແຜ່ນເຈ້ຍມີຄວາມກ້ວາງຍາວເທົ່າກັບເຈ້ຍ A4, ເບື້ອງໜ້າ ຈະເປັນຮູບພາບກ່ຽວກັບຄໍາສັບ ຫຼື ຕົວເລກ, ເບື້ອງຫຼັງຈະມີຄໍາສັບທີ່ເອີ້ນເປັນພາສາຂອງຊົນເຜົ່າຕ່າງໆ

ທ່ານ ຄຳພອງ ຜູ້ຮັບຜິດຊອບໂຄງການດັ່ງກ່າວໄດ້ກ່າວວ່າ ໃນເບື້ອງຕົ້ນແມ່ນມີຄວາມຫຍຸ້ງຍາກຫຼາຍໃນການແປພາສາລາວເປັນພາສາຊົນເຜົ່າຕ່າງໆເພາະຕ້ອງໄດ້ຜ່ານຫຼາຍພາກສ່ວນທີ່ກ່ຽວຂ້ອງເພື່ອກວດກາຄວາມຖືກຕ້ອງທາງດ້ານພາສາຂອງຊົນເຜົ່ານັ້ນໆ, ເຮັດໃຫ້ການຜະລິດອຸປະກອນດັ່ງກ່າວໄດ້ແກ່ຍາວຫຼາຍ. ຮອດປີ 2013 ອົງການ SVA ໄດ້ຈັດພິມຊຸດອຸປະກອນດັ່ງກ່າວ ແລະ ໄດ້ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງສາລະວັນໃນການຈັດຕັ້ງເຝິກອົບຮົມໃຫ້ຄູຈຳນວນ 602 ຄົນຢູ່ໂຮງຮຽນປະຖົມຂອງແຂວງສາລະວັນ ເພື່ອນຳໃຊ້ແຜ່ນພາບຕົວອັກສອນດັ່ງກ່າວ, ເຊິ່ງກໍເຫັນວ່າໄດ້ເປັນການຊ່ວຍໃຫ້ນັກຮຽນຊົນເຜົ່າສາມາດຮຽນພາສາລາວໄດ້ຫຼາຍຂຶ້ນ. ພ້ອມນັ້ນ ອຸປະກອນດັ່ງກ່າວຍັງໄດ້ແຈກຢາຍໄປຍັງສະຖາບັນສ້າງຄູ ເພື່ອນຳໃຊ້ເຂົ້າໃນການຮຽນການສອນໃຫ້ແກ່ນັກຮຽນຄູຕື່ມອີກ. ໃນປີ 2014 ເມື່ອອົງການພັດທະນາເດັກນ້ອຍ ລາວ-ຍີ່ປຸ່ນ ໄດ້ຍ້າຍໄປແຂວງຫຼວງພະບາງ ແລະ ດຳເນີນໂຄງການຢູ່ ເມືອງວຽງຄຳ ແຂວງຫຼວງພະບາງອົງການກໍຈະໄດ້ນຳໃຊ້ຊຸດອຸປະກອນດັ່ງກ່າວເຂົ້າໃນການຝຶກອົບຮົມຄູທີ່ເມືອງວຽງຄຳເພີ່ມເຕີມພ້ອມທັງຈະມີການປະເມີນຜົນ ກ່ຽວກັບການນຳໃຊ້ຊຸດອຸປະກອນດັ່ງກ່າວ.

## ວັດຖຸອຸປະກອນການສ້າງຄູອາດເຂົ້າເຖິງບໍ່ໄດ້ ແລະ ອາດຊຸກຍູ້ໄປທາງຕົວຢ່າງດ້ານລົບກ່ຽວກັບຄວາມພິການ

ເຖິງແມ່ນວ່າ ຫຼັກສູດການສ້າງຄູຈະກວມເອົາລາຍວິຊາ ແລະ ຂໍ້ຄວາມຕ່າງໆ ກ່ຽວກັບການສຶກສາຮຽນຮ່ວມ ແລະ ການສຶກສາສຳລັບ ນັກຮຽນພິການ, ແຕ່ວ່າ ຫຼັກສູດນີ້ອາດບໍ່ກວມເອົານັກຮຽນຄູທີ່ພິການ ຖ້າວ່າ ວັດຖຸອຸປະກອນທີ່ນຳໃຊ້ ຫຼື ທີ່ມີຢູ່ນັ້ນ ຫາກບໍ່ສາມາດເຂົ້າເຖິງໄດ້. ຍົກຕົວຢ່າງ: ການທົບທວນການສ້າງຄູຢູ່ໃນບາງປະເທດໃນອາຊີ ແລະ ປາຊີຟິກ ໂດຍອົງການອຸຍເນັດສະໂກບາງກອກ ໄດ້ພົບເຫັນເຖິງການຂາດເຂີນວັດຖຸອຸປະກອນການສ້າງຄູ ໃນຮູບແບບທາງເລືອກອື່ນໆເຊັ່ນວ່າ ໂຕອັກສອນນູນສຳລັບຄົນພິການ[6] . ສິ່ງດັ່ງກ່າວນີ້, ເປັນບັນຫາທົ່ວໂລກ ດັ່ງທີ່ໄດ້ລະບຸໄວ້ໃນບົດຄວາມຂ້າງລຸ່ມນີ້ ໂດຍນັກຮຽນຄູໃນປະເທດເຄນຢາ:

> “ໃນນາມເປັນຄູຝຶກຄົນຕາບອດ, ຂ້າພະເຈົ້າໃຊ້ໂຕອັກສອນນູນສຳລັບຄົນພິການ, ແຕ່ວ່າພວກເຂົາເຈົ້າຂາດວັດຖຸອຸປະກອນການອ່ານທີ່ເປັນໂຕອັກສອນນູນ ແລະ ບາງເທື່ອກໍ່ຂາດເຂີນເອກະສານທີ່ເປັນໂຕອັກສອນນູນ ສຳລັບຄົນພິການ. ນອກນັ້ນກໍ່ຍັງຂາດເຂີນອຸປະກອນຄິດໄລ່ ເຊິ່ງເຮັດໃຫ້ພົບກັບຄວາມຫຍຸ້ງຍາກ ສຳລັບນັກຮຽນທີ່ພິການທາງສາຍຕາທີ່ຈະສຶກສາວິຊານີ້. ບໍ່ມີຄູບັນຍາຍທີ່ຮຽນຈົບດ້ານການສຶກສາພິເສດ ແລະ ມີພຽງຄົນດຽວເທົ່ານັ້ນທີ່ຮູ້ຈັກໂຕອັກສອນນູນສຳລັບຄົນພິການ. ສະນັ້ນ, ສິ່ງດັ່ງກ່າວນີ້ຈຶ່ງກາຍເປັນບັນຫາທ້າທາຍຫຼາຍໃນການຂຽນບົດ ແລະ ໃນການສອບເສັງ[7].

ການທົບທວນນີ້ ຍັງໄດ້ພົບອີກວ່າຄົນພິການບໍ່ໄດ້ຮັບຄວາມສຳຄັນໃນວັດຖຸອຸປະກອນການສ້າງຄູ. ຍົກຕົວຢ່າງ: ໃນປຶ້ມອ່ານ ໃນປະເທດໃດໜຶ່ງ, ມີພຽງແຕ່ 0,35% ຂອງຄົນພິການເທົ່ານັ້ນທີ່ໄດ້ຮັບຄວາມສຳຄັນໃນປຶ້ມເຫຼົ່ານີ້. ນອກຈາກນັ້ນແລ້ວ, ຄົນພິການ ທີ່ເນັ້ນໜັກໃຫ້ເຫັນຄວາມສຳຄັນໃນປຶ້ມເຫຼົ່ານີ້ ມັກຈະຖືກຈັດປະເພດໄປໃນທາງລົບ[8].

---

[6] Forgacs, ປີ 2012, ໜ້າທີ 37.

[7] ໂດຍ Mwanyalo, P. ຮ່ວມກັບ Lewis, I. ປີ 2012. 'ຄວາມພະຍາຍາມ ໃນການສິດສອນທີ່ດີກວ່າເກົ່າ. ການສຳພາດ Peter Mwanyalo ໂດຍ EENET, ປະເທດເຄັນຢາ'. ຈົດໝາຍຂ່າວ ຂອງ ການທົບທວນ ການຊ່ວຍເຫຼືອການສຶກສາ. ສະບັບທີ 1. ເດືອນທັນວາ 2012. ໜ້າທີ 15.

[8] Forgacs, ໜ້າທີ 37.

ການຂາດເຂີນວັດຖຸອຸປະກອນການສ້າງຄູ ແລະ ພາບພົດດ້ານລົບຕໍ່ກັບຄົນພິການໃນວັດຖຸອຸປະກອນການສ້າງຄູ, ອາດເຮັດໃຫ້ເກີດມີທັດສະນະຕາຍຕົວ ທີ່ວ່າ ຄົນພິການບໍ່ແມ່ນສ່ວນໜຶ່ງຂອງຊີວິດປະຈໍາວັນ ແລະ ບໍ່ໄດ້ຄາດຫວັງໄວ້ວ່າ ຈະກາຍມາເປັນຄູສອນ.

## ວັດຖຸອຸປະກອນການສ້າງຄູອາດຊຸກຍູ້ໃຫ້ມີຮູບແບບທີ່ຕາຍຕົວດ້ານລົບກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ

ດັ່ງທີ່ພວກເຮົາໄດ້ເຫັນໃນ *ປຶ້ມຄູ່ມືເຫຼັ້ມ 3* ທີ່ວ່າຫຼັກສູດສ້າງຄູມັກຈະຊໍ້າເຕີມການຈໍາແນກບົດບາດຍິງ-ຊາຍ. ສິ່ງດັ່ງກ່າວນີ້ ຍັງສະແດງໃຫ້ເຫັນໃນວັດຖຸອຸປະກອນທີ່ນໍາໃຊ້ໃນການສ້າງຄູ ເຊິ່ງອາດບໍ່ກວມເອົາປະເດັນກ່ຽວກັບ ບົດບາດຍິງ-ຊາຍຢ່າງລະອຽດ, ພ້ອມທັງອາດສ້າງພາບພົດຂອງເພດຍິງ ແລະ ເພດຊາຍໃນລັກສະນະຕາຍຕົວ ແລະ ອາດເປັນຜູ້ຊາຍທີ່ຂຽນຂຶ້ນມາ.

ການທົບທວນຂອງອົງການຢູເນັດສະໂກບາງກອກ ໃນປະເທດໃດໜຶ່ງໄດ້ພົບວ່າ "...ມີວັດຖຸອຸປະກອນການສ້າງຄູຈໍານວນໜ້ອຍດຽວ ທີ່ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ພາບປະກອບບາງອັນກໍ່ສະແດງໃຫ້ເຫັນເຖິງຄວາມບໍ່ສົມດູນກັນລະຫວ່າງຊາຍ ແລະ ຍິງ. ຍັງບໍ່ມີແຫຼ່ງວັດຖຸອຸປະກອນສ້າງຄູ ສະເພາະທີ່ໃຫ້ຄວາມສໍາຄັນ ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ"[9].

ການຂາດຄວາມສະເໝີພາບລະຫວ່າງຍິງ-ຊາຍ ທີ່ພົບເຫັນທົ່ວໄປໃນວັດຖຸອຸປະກອນການສ້າງຄູ, ແລະ ຮູບແບບທີ່ຕາຍຕົວ ກ່ຽວກັບ ຍິງ-ຊາຍ ທີ່ມີຢູ່ນັ້ນຈະບໍ່ຊ່ວຍໃນການສົ່ງເສີມນັກຮຽນຄູໃຫ້ກາຍມາເປັນຄູທີ່ຕອບສະໜອງກັບ ຄວາມສະເໝີພາບຍິງ-ຊາຍ ແລະ ອາດຈະເປັນປັດໄຈເຮັດໃຫ້ແມ່ຍິງບາງຄົນຮູ້ສຶກຖືກຈໍາແນກ ແລະ ທໍ້ຖອຍໃຈທີ່ຈະສືບຕໍ່ການສ້າງຄູ.

ຄໍາຖາມຕ່າງໆ ທີ່ທ່ານສາມາດຖາມ ເພື່ອຊ່ວຍວິເຄາະສະຖານະພາບ ໃນສະພາບການຂອງທ່ານ:

- ມີວັດຖຸອຸປະກອນການສ້າງຄູອັນໃດ ແລະ ຫຼາຍເທົ່າໃດທີ່ເປັນພາສາຊົນເຜົ່າໃນປະເທດຂອງທ່ານ? ນັກຮຽນຄູສາມາດນໍາໃຊ້ວັດຖຸອຸປະກອນເຫຼົ່ານີ້ໄດ້ເລີຍບໍ່ ໃນເວລາຕ້ອງການໃຊ້? ນັກຮຽນຄູໄດ້ຮຽນບໍ່ ກ່ຽວກັບການສິດສອນ ເປັນພາສາແມ່/ພາສາຊົນເຜົ່າ ຫຼື ເປັນພາສາຂອງກຸ່ມຄົນສ່ວນຫຼາຍ/ພາສາແຫ່ງຊາດ?
- ມີວັດຖຸອຸປະກອນການສ້າງຄູອັນໃດ ແລະ ຫຼາຍເທົ່າໃດທີ່ເນັ້ນໜັກໃຫ້ຄວາມສໍາຄັນ ຂອງກຸ່ມຊົນເຜົ່າ/ກຸ່ມພາສາ, ຄົນພິການ, ຄົນຈາກເຂດຊົນນະບົດ ແລະ ເທດສະບານ ແລະ ຄົນທຸກຍາກ ຫຼື ຄົນທີ່ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ອື່ນໆ? etc.?
- ລັກສະນະຕ່າງໆ ໄດ້ສະແດງອອກໃຫ້ເຫັນຢ່າງເທົ່າທຽມກັນບໍ່ ໃນທາງດ້ານຄວາມເປັນມະນຸດທີ່ເທົ່າທຽມກັນ ແລະ ຕໍາແໜ່ງຄວາມຮັບຜິດຊອບ ແລະ ອື່ນໆ?
- ຊາຍ ແລະ ຍິງ/ເດັກຊາຍ ແລະ ເດັກຍິງ ມີພາບພົດທີ່ເທົ່າທຽມກັນບໍ່ ໃນວັດຖຸອຸປະກອນສ້າງຄູ ແລະ ມີບົດບາດອໍານາດທີ່ສົມດູນກັນບໍ ຫຼື ຫຼຸດລື່ນກັນ?
- ແມ່ນໃຜ ເປັນຜູ້ສະໜອງປັດໄຈນໍາເຂົ້າໃຫ້ແກ່ການສ້າງວັດຖຸອຸປະກອນສ້າງຄູ? ມີກົນໄກຕ່າງໆທີ່ຮັບປະກັນວ່າ ບັນດາຜູ້ສ້າງວັດຖຸອຸປະກອນນັ້ນ ມາຈາກຫຼາຍບ່ອນ ແລະ ໄດ້ປຶກສາຫາລືກັບພາກສ່ວນກ່ຽວຂ້ອງຈາກກຸ່ມທີ່ແຕກຕ່າງກັນໃນສັງຄົມບໍ?

[9] Ibid., ໜ້າທີ 35.

# ເປົ້າໝາຍຂອງການໂຄສະນາສົ່ງເສີມ

## ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 9

> *"ວັດຖຸອຸປະກອນການສ້າງຄູ ຈຳເປັນຕ້ອງ ກວມເອົານັກຮຽນຄູໝົດທຸກຄົນ ແລະ ໃຫ້ນັກຮຽນຄູທຸກຄົນ ສາມາດເຂົ້າເຖິງໄດ້."*

ເປັນຄວາມພະຍາຍາມທີ່ເສຍລ້າໆ ສຳລັບການສຶກສາຮຽນຮ່ວມພາຍໃນໂຮງຮຽນ ຖ້າວ່າການສຶກສາທີ່ນັກຮຽນຄູໄດ້ຮັບນັ້ນ ບໍ່ແມ່ນການສຶກສາຮຽນຮ່ວມ. ສະນັ້ນ, ວັດຖຸອຸປະກອນທີ່ນຳໃຊ້ໃນການສ້າງຄູນັ້ນ ຈຶ່ງມີຄວາມສຳຄັນ ທີ່ຕ້ອງສະແດງໃຫ້ເຫັນເຖິງ ການສຶກສາຮຽນຮ່ວມຢູ່ໃນພາກປະຕິບັດ.

ບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ ຈຳເປັນຕ້ອງເຂົ້າໃຈເຖິງວິທີການຕ່າງໆ ເພື່ອສ້າງວັດຖຸອຸປະກອນໃຫ້ມີພາສາທ້ອງຖິ່ນ ທັງໃນທາງດ້ານການສ້າງວັດຖຸອຸປະກອນທີ່ເໝາະສົມ ແລະ ການແປ/ປັບປຸງວັດຖຸອຸປະກອນຈາກພາສາອື່ນໆ. ວັດຖຸອຸປະກອນການສ້າງຄູ ຍັງຕ້ອງໄດ້ຮັບການທົບທວນຄືນຢ່າງລະອຽດ ໂດຍພາກສ່ວນທີ່ກ່ຽວຂ້ອງ (ຄູ, ນັກຮຽນຄູ, ສະມາຊິກຊຸມຊົນ ແລະ ອື່ນໆ) ຈາກກຸ່ມໃຊ້ພາສາທີ່ແຕກຕ່າງກັນ.

ມີຄວາມຈຳເປັນຫຼາຍ ທີ່ຈະຕ້ອງພະຍາຍາມເຮັດໃຫ້ນັກຮຽນຄູທີ່ພິການສາມາດເຂົ້າເຖິງວັດຖຸອຸປະກອນການສ້າງຄູ. ນັ້ນໝາຍຄວາມເຖິງ ການປະຕິບັດຕາມຫຼັກການຂອງການອອກແບບຢ່າງທົ່ວເຖິງ. ຕົວຢ່າງ: ອາດໝາຍເຖິງ ການສ້າງວັດຖຸອຸປະກອນໃນຮູບແບບຂອງສຽງ, ສິ່ງພິມຂະໜາດໃຫຍ່ ຫຼື ໂຕອັກສອນນູນສຳລັບຄົນພິການ; ການນຳໃຊ້ ວິທີການຫຍິບປຶ້ມ ທີ່ເຮັດໃຫ້ປຶ້ມນັ້ນເປີດຄ້າງໄວ້ຢູ່ເທິງໂຕະແທນການຫຍິບທີ່ຈະຕ້ອງຈັບປຶ້ມນັ້ນໄວ້ຕະຫຼອດເວລາ ເພື່ອໃຫ້ມັນເປີດ; ການຕື່ມຄຳອະທິບາຍໃສ່ວັດຖຸອຸປະກອນທີ່ເປັນວີດີໂອ; ການສ້າງ ຫຼື ການແນະນຳຄູໃນສະຖາບັນສ້າງຄູ ກ່ຽວກັບ ວິທີການສ້າງວັດຖຸອຸປະກອນທີ່ສຳຜັດໄດ້ ແລະ ອື່ນໆ. ມັນຈຳເປັນຕ້ອງປຶກສາຫາລືກັບບຸກຄົນອື່ນໆ ທີ່ກ່ຽວຂ້ອງທີ່ເປັນຄົນພິການເຊິ່ງກວມທັງນັກຮຽນ ແລະ ຄູປະຈຳການແລ້ວ ກ່ຽວກັບ ຮູບແບບທາງເລືອກສຳລັບວັດຖຸອຸປະກອນສ້າງຄູ ເພື່ອຮັບປະກັນວ່າແຫຼ່ງຊັບພະຍາກອນທີ່ມີຢູ່ຢ່າງຈຳກັດນັ້ນໄດ້ຖືກນຳໃຊ້ໃຫ້ເກີດປະສິດທິພາບສູງສຸດ. ນອກຈາກນັ້ນແລ້ວ ກໍຍັງຈຳເປັນຕ້ອງ ປຶກສາຫາລືກັບ ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ບັນດາອົງການຈັດຕັ້ງຄົນພິການ ເພື່ອຂໍຄຳແນະນຳ ກ່ຽວກັບຮູບແບບ ແລະ ການສະໜອງງົບປະມານໃຫ້ ການຜະລິດວັດຖຸອຸປະກອນການສ້າງຄູໃນຮູບແບບທາງເລືອກນັ້ນ.

**ກໍລະນີສຶກສາທີ 1 ຈາກ ສ.ປ.ປ ລາວ**

*ຫົວຂໍ້: ການຜະລິດສື່ການສອນເພື່ອສົ່ງເສີມການສຶກສາຮຽນຮ່ວມໃນສະຖາບັນສ້າງຄູ*

ກອງປະຊຸມຂອງການສຶກສາເພື່ອໝົດທຸກຄົນ ໄດ້ຈັດຂຶ້ນທີ່ຈອມທຽນ ປະເທດໄທໄດ້ຄົ້ນຄວ້າເຖິງວຽກງານການສຶກສາຮຽນຮ່ວມ ໂດຍເນັ້ນເຖິງການຕອບສະໜອງການສຶກສາເດັກດ້ອຍໂອກາດ ເຊັ່ນ: ກຸ່ມເດັກຍິງ, ແມ່ຍິງຜູ້ທີ່ຢູ່ໃນເຂດຊົນນະບົດ, ຫ່າງໄກສອກຫຼີກ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມາຈາກກຸ່ມດ້ອຍໂອກາດອື່ນໆ. ການສຶກສາຮຽນຮ່ວມໄດ້ດຳເນີນຕາມກອງປະຊຸມ ໂດຍນຳເອົາອຸປະ ກອນການສອນລົງທີ່ສະຖາບັນສ້າງຄູທັງ 8 ແຫ່ງ ທີ່ມີຫົວຂໍ້ວ່າ: ວິທີສອນການສຶກສາຮຽນຮ່ວມ.

ໂດຍອີງຕາມນະໂຍບາຍແຫ່ງຊາດ ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ 2011-2015 ຈຶ່ງໄດ້ຈັດຕັ້ງປະຕິບັດຕາມນະໂຍບາຍດັ່ງກ່າວ ໂດຍລະບຸເຖິງການເອື້ອອຳນວຍຄວາມສະດວກຂອງວຽກງານການສຶກສາຮຽນຮ່ວມ.



© DTE, MOES, Lao PDR

ອົງການອຸຍແນັດສະໂກທີ່ຮັບຜິດຊອບນະໂຍບາຍການສຶກສາທົ່ວໂລກ ຈຶ່ງສ້າງຄູ່ມືກ່ຽວກັບການສຶກສາຮຽນຮ່ວມຂຶ້ນລວມມີ 7 ເຫຼັ້ມ ເຊິ່ງເປັນ ພາສາອັງກິດ ແລະ ຮຽກຮ້ອງໃຫ້ລັດພາຄີແຕ່ລະປະເທດດັດປັບໃຫ້ແທດເໝາະກັບສະພາບແວດລ້ອມຕົວຈິງ ຂອງແຕ່ລະປະເທດ, ໂດຍການ ຊ່ວຍເຫຼືອຂອງອົງການ (ເຊັບຊິວເດັນນອກແວ) ຈຶ່ງໄດ້ມີການ ເລີ່ມແປ ແລະ ຈົນເຖິງປີ 2008 ຈຶ່ງໄດ້ຮຽບຮຽງຄືນໂດຍ ແມ່ນສູນ ການສຶກສາຮຽນຮ່ວມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເປັນຜູ້ ຮຽບຮຽງຄືນ. ໂດຍນຳໃຊ້ງົບປະມານຂອງອົງການອຸຍແນັດສະໂກປະຈຳພາກພື້ນ ຈຶ່ງໄດ້ມີການແປຊຸດປຶ້ມຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້, ພ້ອມທັງພິມແຈກຢາຍຢ່າງກວ້າງຂວາງໃນທົ່ວປະເທດ. ຄູ່ມືດັ່ງກ່າວມີຈຳນວນ 4 ເຫຼັ້ມ ຄື: ຄູ່ມືແນະນຳການສ້າງສະພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມສຸຂະພາບ, ຄູ່ມືການປະຕິບັດວິໄນ, ການສຶກສາອົບຮົມແບບສ້າງສັນໃນຫ້ອງຮຽນຮ່ວມ. ເພື່ອສືບຕໍ່ຈັດຕັ້ງປະຕິບັດກ່ຽວກັບການສຶກສາຮຽນຮ່ວມ, ກະຊວງສຶກສາທິການ ແລະ ກິລາ, ສູນການສຶກສາຮຽນຮ່ວມ ຮ່ວມກັບອົງການຈັດຕັ້ງທີ່ກ່ຽວຂ້ອງຈຶ່ງໄດ້ຈັດໃຫ້ມີ 4 ກິດຈະກຳ ຄື:

ກິດຈະກຳທີ 1: ກອງປະຊຸມຜ່ານປຶ້ມຄູ່ມືຝຶກອົບຮົມວຽກງານສຶກສາຮຽນຮ່ວມຈັດຂຶ້ນຄັ້ງວັນທີ 9-13/01/2012 ທີ່ບ້ານພັກແຄມງື່ມ ໂດຍມີທ່ານ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ເປັນປະທານ, ທ່ານຜູ້ອຳນວຍການສູນ ແລະ ຮອງຜູ້ອຳນວຍການສູນ ແລະ ທ່ານຫົວໜ້າກົມສ້າງຄູ. ນອກຈາກນັ້ນ, ຍັງມີບັນດາຫົວໜ້າພະແນກ, ວິຊາການພາຍໃນສູນເຂົ້າຮ່ວມ ລວມທັງໝົດ 15 ຄົນ.

ກິດຈະກຳທີ່ 2: ກອງປະຊຸມຝຶກອົບຮົມການສຶກສາຮຽນຮ່ວມຈັດຂຶ້ນຄັ້ງວັນທີ 23-27/01/2012 ທີ່ບ້ານພັກແຄມງື່ມ ໂດຍມີທ່ານ ຫົວໜ້າກົມສ້າງຄູເປັນປະທານ, ທ່ານຜູ້ອຳນວຍການສູນ ແລະ ຮອງຜູ້ອຳນວຍການສູນ, ຫົວໜ້າພະແນກວິຊາການພາຍໃນສູນ, ຄະນະຄູຝຶກຈາກສະຖາບັນສ້າງຄູ 8 ແຫ່ງ ລວມທັງໝົດ 23 ຄົນ.

ກິດຈະກຳທີ່ 3: ກອງປະຊຸມທົບທວນຄູຝຶກກ່ຽວກັບວຽກງານສຶກສາຮຽນຮ່ວມ ຄັ້ງວັນທີ 6-29/10/2012 ໂດຍມີ ທ່ານຫົວໜ້າກົມສ້າງຄູ ເປັນປະທານ, ທ່ານຜູ້ອຳນວຍການສູນ ແລະ ຮອງຜູ້ອຳນວຍການສູນ ພະແນກສຶກສາພິເສດ, ຫົວໜ້າພະແນກບໍລິຫານສູນການສຶກສາຮຽນຮ່ວມ, ຫົວໜ້າພະແນກສຶກສາຊົນເຜົ່າ, ຫົວໜ້າພະແນກຄວາມສະເໝີພາບຍິງຊາຍ, ຫົວໜ້າໜ່ວຍງານສະໜອງອາຫານໃນໂຮງຮຽນ, ຮອງຫົວໜ້າພະແນກສ້າງຄູ-ກົມສ້າງຄູ, ວິຊາການສູນການສຶກສາຮຽນຮ່ວມ ແລະ ຄະນະຄູຝຶກຈາກສະຖາບັນສ້າງຄູ 8 ແຫ່ງ, ລວມທັງໝົດ 47 ຄົນ.

ກິດຈະກຳທີ່ 4: ກອງປະຊຸມຝຶກອົບຮົມການສຶກສາຮຽນຮ່ວມໃຫ້ແກ່ພະນັກງານ-ຄູອາຈານທີ່ສະຖາບັນສ້າງຄູ 8 ແຫ່ງ. ຈັດຂຶ້ນຄັ້ງວັນທີ 5-21/11/2012 ໂດຍຜູ້ເຂົ້າຮ່ວມ ແລະ ຕິດຕາມຂັ້ນສູນກາງ ເຊັ່ນ: ຜູ້ອຳນວຍການ/ຮອງຜູ້ອຳນວຍການສູນ, ຫົວໜ້າພະແນກ/ວິຊາການ, ສູນການສຶກສາຮຽນຮ່ວມ ແລະ ຄະນະຄູຝຶກຂັ້ນສະຖາບັນສ້າງຄູແຕ່ລະແຫ່ງຮ່ວມກັນລົງຖອດຖອນບົດຮຽນ ແລະ ສອນຕົວຈິງ.

ປະຈຸບັນ ສະຖາບັນສ້າງຄູແຕ່ລະແຫ່ງໄດ້ນຳໃຊ້ອຸປະກອນດັ່ງກ່າວເຂົ້າໃນການຮຽນການສອນຕົວຈິງແລ້ວ, ພິເສດສະຖາບັນສ້າງຄູດົງຄຳຊ້າງໄດ້ຝຶກອົບຮົມໃຫ້ນັກສຶກສາປີສຸດທ້າຍສາຍຄູອະນຸບານ, ປະຖົມ ແລະ ມັດທະຍົມສຶກສາ ໃນຄັ້ງວັນທີ 9-13/06/2014 ເພື່ອເຮັດໃຫ້ນັກສຶກສາໄດ້ນຳໄປໃຊ້ເຂົ້າໃນການສິດສອນຕົວຈິງຢູ່ໃນແຕ່ລະທ້ອງຖິ່ນ.



© DTE, MOES, Lao PDR

ຮູບ: ການຝຶກອົບຮົມການສຶກສາຮຽນຮ່ວມໃຫ້ແກ່ນັກສຶກສາຄູປີສຸດທ້າຍສົກຮຽນ 2013-2014 ທີ່ວິທະຍາໄລຄູດົງຄຳຊ້າງ

## ກໍລະນີສຶກສາທີ 2 ຈາກ ສ.ປ.ປ ລາວ

*ຫົວຂໍ້: ການຜະລິດສື່ການສອນເພື່ອສົ່ງເສີມການສຶກສາຮຽນຮ່ວມໃນສະຖາບັນສ້າງຄູ*

ໂຮງຮຽນສຶກສາພິເສດວຽງຈັນສັງກັດຢູ່ໃນສູນການແພດຟື້ນຟູໜ້າທີ່ການ, ກະຊວງສາທາລະນະສຸກ ເຊິ່ງເປັນບ່ອນສິດສອນເດັກຫູໜວກໂດຍສະເພາະໂດຍໃຊ້ພາສາມືເປັນຫຼັກ. ສິ່ງທີ່ຂາດບໍ່ໄດ້ຄື ການນຳໃຊ້ ອຸປະກອນການສອນເປັນຕົ້ນຕໍ ແລະ ສຳຄັນສຳລັບເດັກທີ່ມີບັນຫາໃນດ້ານນີ້ເພາະວ່າເດັກ ຈະບໍ່ສາມາດຮູ້ ແລະ ຈຳແນກສິ່ງຕ່າງໆໄດ້ດ້ວຍຕົນເອງ. ເພາະສະນັ້ນ, ອຸປະກອນການສອນຈະຊ່ວຍ ໄດ້ຫຼາຍທີ່ສຸດ, ພ້ອມນັ້ນ ອຸປະກອນຈະມີຫຼາຍສີສັນ ແລະຫຼາກຫຼາຍຊະນິດເຊັ່ນ: ຮູບພາບສັດ, ໝາກໄມ້, ເຄື່ອງໃຊ້ ແລະ ອື່ນໆ. ອຸປະກອນເຫຼົ່ານີ້ເຮົາ ສາມາດຜະລິດຂຶ້ນໄດ້ເອງ ແລະ ສາມາດເອົາມາຈາກ ທຳມະຊາດທີ່ຫາໄດ້ງ່າຍ.



ຮູບ 1: ສື່ອຸປະກອນປະກອບການສອນການສຶກສາຮຽນຮ່ວມ



© DTE, MOES, Lao PDR

ຮູບ 2: ການໃຊ້ພາສາມືໃນຊົ່ວໂມງຄົ້ນຄວ້າເປັນກຸ່ມນ້ອຍ

ຜ່ານການສອນເດັກທີ່ມີບັນຫາງຫູ ແລະ ທາງປາກທ່ານຈັນທີ, ຜູ້ອຳນວຍການໂຮງຮຽນສຶກສາ ພິເສດວຽງຈັນ, ສູນການແພດຟື້ນຟູໜ້າທີ່ການ, ກະຊວງສາທາລະນະສຸກໄດ້ໃຫ້ການວ່າເດັກຜູ້ໜຶ່ງມາ ເຂົ້າໂຮງຮຽນໃໝ່ຈະບໍ່ຮູ້ຫຍັງເລີຍແຕ່ວ່າພວກເຂົາເຈົ້າເຄີຍໄດ້ເຫັນ, ໄດ້ກິນ ແລະ ໄດ້ນຳໃຊ້ແຕ່ວ່າບໍ່ຮູ້ ວ່າແມ່ນຫຍັງ. ເພາະສະນັ້ນ, ເຮົາຈະຊອກວິທີສິດສອນໂດຍນຳໃຊ້ອຸປະກອນຕົວຢ່າງ

- ໝາກກ້ຽງເວລາຄູສອນຈະໃຊ້ຮູບໝາກກ້ຽງໃຫ້ເບິ່ງ, ເຂົາເຈົ້າຈະບອກເຮົາວ່າຢູ່ບ້ານກໍມີ, ເຄີຍກິນ, ເຄີຍຮູ້ແລະສິ່ງອື່ນໆກໍເຊັ່ນດຽວກັນ
- ຜ່ານການສອນຕົວຈິງປະມານ 2-3 ເດືອນກໍສາມາດປະເມີນໄດ້; ຈາກການປະເມີນເຫັນໄດ້ວ່າ: ເດັກສາມາດເຂົ້າໃຈ ແລະ ຮູ້ຈຳແນກຊະນິດຕ່າງໆໄດ້ດີ, ການນຳໃຊ້ອຸປະກອນເຂົ້າໃນການຮຽນການສອນ ແມ່ນສຳຄັນທີ່ສຸດໂດຍສະເພາະແມ່ນຊັ້ນອະນຸບານ ແລະ ຊັ້ນປະຖົມ.

### ກໍລະນີສຶກສາທີ 3 ຈາກ ສ.ປ.ປ ລາວ

*ຫົວຂໍ້: ອຸປະກອນຊ່ວຍການສຶກສາສໍາລັບເດັກພິການທາງສະໝອງໂອທິສຕິກ*



© DTE, MOES, Lao PDR

ຮູບ: ອຸປະກອນ

ສະມາຄົມເພື່ອໂອທິສຕິກໄດ້ລິເລີ່ມເປີດຮັບນັກຮຽນທີ່ມີບັນຫາທາງສະໝອງໂດຍສະເພາະເດັກທີ່ມີພາວະເປັນໂອທິສຕິກໂດຍປະກອບມີແນວທາງການຝຶກເດັກໃຫ່ມີການພັດທະນາດັ່ງນີ້:

- ການພັດທະນາທັກສະທາງກາຍະພາບ ຫຼື ກົນໄກກ້າມເນື້ອ
- ການພັດທະນາທັກສະທາງສັງຄົມ
- ການພັດທະນາທັກສະທາງດ້ານອາລົມພຶດຕິກໍາ
- ການພັດທະນາທັກສະທາງດ້ານສື່ສານ

ຜ່ານການສິດສອນຂອງຄູພາຍໃນສູນໄດ້ໃຊ້ອຸປະກອນທີ່ຈໍາເປັນເຊັ່ນ: ອຸປະກອນທີ່ເປັນເອກະສານໃຫ້ຄວາມຮູ້ກ່ຽວກັບແຜນການຈັດການສຶກສາສະເພາະບຸກຄົນ, ລູກກິ້ງ, ພາບທີ່ເປັນເຄື່ອງໝາຍ, ວັດຖຸອຸປະກອນທີ່ນໍາມາໃຊ້ຢູ່ໃນຊີວິດປະຈໍາວັນ, ສື່ການຮຽນ-ການສອນຫຼາກຫຼາຍ.

### ຂໍ້ຄວາມຂອງການສົ່ງເສີມ ວັດຖຸອຸປະກອນການສ້າງຄູ 10

> *"ວັດຖຸອຸປະກອນການສ້າງຄູ ຈໍາເປັນຕ້ອງຖ່າຍທອດຂໍ້ຄວາມທີ່ບໍ່ມີການຈໍາແນກ, ແກ້ໄຂຮູບແບບທີ່ຕາຍຕົວແລະ ສົ່ງເສີມນັກຮຽນຄູທຸກຄົນ ໃຫ້ຮູ້ສຶກວ່າພວກເຂົາເຈົ້າມີຄຸນຄ່າ ແລະ ມີສ່ວນຮ່ວມໂດຍບໍ່ຈໍາແນກເຖິງຄວາມເປັນມາຂອງພວກເຂົາ".*

ດັ່ງທີ່ໄດ້ກ່າວຜ່ານມານັ້ນ ມັນຈໍາເປັນຕ້ອງປຶກສາຫາລືກັບ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ກ່ຽວກັບການສ້າງວັດຖຸອຸປະກອນການສ້າງຄູ. ທີມງານສ້າງວັດຖຸອຸປະກອນຈໍາເປັນຕ້ອງມີສະມາຊິກຜູ້ທີ່ຕາງໜ້າໃຫ້ກຸ່ມຄົນທີ່ຫຼາກຫຼາຍ ໃນປະເທດຂອງພວກເຂົາເຈົ້າ ແລະ ຈໍາເປັນຕ້ອງໄດ້ຜ່ານການຝຶກອົບຮົມໃນການຊອກຫາ ແລະ ຈັດການກັບການຈໍາແນກໃນວັດຖຸອຸປະກອນການສ້າງຄູ. ພ້ອມກັນນັ້ນກໍຕ້ອງອໍານວຍຄວາມສະດວກໃຫ້ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ແລະ ໃຫ້ບັນດາຜູ້ສ້າງວັດຖຸອຸປະກອນໄດ້ເວົ້າອອກມາ ກ່ຽວກັບຮູບແບບທີ່ຕາຍຕົວ ແລະ ຕົວຢ່າງຂອງການຈໍາແນກທີ່ພວກເຂົາເຈົ້າພົບພໍ້ໃນ ວັດຖຸອຸປະກອນນັ້ນ ແລະ ຮູ້ວ່າທັດສະນະຂອງພວກເຂົາເຈົ້າຈະໄດ້ຮັບການເຄົາລົບນັບຖື ແລະໄດ້ຮັບການພິຈາລະນາຢ່າງຈິງຈັງ.

ວັດຖຸອຸປະກອນການສ້າງຄູທັງໝົດ, ບໍ່ວ່າຈະສະເພາະເຈາະຈົງ ກ່ຽວກັບການສຶກສາຮຽນຮ່ວມ ຫຼືບໍ່ ກໍຕາມ, ແມ່ນຈຳເປັນຕ້ອງໄດ້ທົບທວນຄືນ/ກວດສອບຄືນ ເພື່ອຊອກໃຫ້ເຫັນຮູບແບບທີ່ຕາຍຕົວ ແລະ ຕົວຢ່າງຂອງການຈຳແນກທີ່ໄດ້ກາຍເປັນລັກສະນະທ້າທາຍ. ຫຼັງຈາກນັ້ນ ກໍຕ້ອງທົບທວນ ກ່ຽວກັບວັດຖຸອຸປະກອນເຫຼົ່ານັ້ນ ເພື່ອກຳຈັດອັນເກົ່າ ແລະຂະຫຍາຍອັນໃໝ່.

ເນື່ອງຈາກວ່າ ການທົບທວນວັດຖຸອຸປະກອນການສ້າງຄູທັງໝົດຢ່າງຄົບຖ້ວນນັ້ນແມ່ນມີມູນຄ່າສູງ ແລະ ໃຊ້ເວລາຫຼາຍ, ສະນັ້ນ ການດຳເນີນອາດຈະລ່າຊ້າ. ໃນເວລາດຽວກັນນັ້ນ, ຄູໃນສະຖາບັນສ້າງຄູ ຈຳເປັນຕ້ອງໄດ້ສຶກສາ ກ່ຽວກັບວິທີການຊອກຫາ ແລະ ແກ້ໄຂຕົວຢ່າງຮູບແບບທີ່ຕາຍໂຕ ແລະ ຕົວຢ່າງຂອງການຈຳແນກທີ່ຢູ່ພາຍໃນ ວັດຖຸອຸປະກອນ ທີ່ພວກເຂົາໄດ້ນຳໃຊ້ ໂດຍການຫັນປ່ຽນຕົວຢ່າງດ້ານລົບໄປເປັນໂອກາດໃນການຮຽນຮູ້ ຫຼື ເປັນຈຸດສົນທະນາສຳລັບ ນັກຮຽນຄູຂອງພວກເຂົາເຈົ້າ. ຂະບວນການພິຈາລະນານີ້ຄວນເນັ້ນໜັກເປັນພິເສດໃສ່ການຮັບປະກັນວ່າ ເນື້ອໃນທີ່ມີຄວາມລຳອຽງທີ່ຍັງເຫຼືອຢູ່ນັ້ນ ບໍ່ໄດ້ກະທົບໃນທາງລົບຕໍ່ກັບທັດສະນະຂອງນັກຮຽນຄູ ຫຼື ຕໍ່ກັບເຂົາເຈົ້າເອງ ຫຼື ຕໍ່ກັບໝູ່ເພື່ອນຂອງພວກເຂົາເຈົ້າ ແລະ ບໍ່ໄດ້ເຮັດໃຫ້ພວກເຂົາເຈົ້າທໍ້ຖອຍໃຈໃນການສືບຕໍ່ຮໍ່າຮຽນ.

# ຈະຮູ້ໄດ້ແນວໃດວ່າວຽກງານໂຄສະນາສົ່ງເສີມນັ້ນມີຜົນກະທົບດ້ານບວກ

*ປື້ມຄູ່ມືເຫຼັ້ມທີ 1* ໄດ້ເນັ້ນໜັກວ່າ ໃນເວລາວາງແຜນວຽກງານສົ່ງເສີມນັ້ນ ທ່ານຈະຕ້ອງສ້າງຕົວຊີ້ບອກ ເພື່ອຊ່ວຍທ່ານຕິດຕາມຂະບວນການຕ່າງໆ ແລະ ຜົນໄດ້ຮັບຂອງວຽກງານຂອງທ່ານ. ຕົວຊີ້ບອກທີ່ທ່ານຈະສ້າງຂຶ້ນມານັ້ນຈະຂຶ້ນກັບລາຍລະອຽດຂອງຈຸດປະສົງການສົ່ງເສີມຂອງທ່ານ. ບັນດາຕົວຊີ້ບອກ ເຊັ່ນວ່າ: ແຜນວຽກ, ຄວນສ້າງຂຶ້ນມາ ໂດຍຜ່ານຂະບວນການແບບມີສ່ວນຮ່ວມທີ່ກວມເອົາຫຼາຍພາກສ່ວນກ່ຽວຂ້ອງ.

ລາຍການດັ່ງຕໍ່ໄປນີ້ ໄດ້ສະເໜີກ່ຽວກັບ ຕົວຊີ້ບອກບາງອັນທີ່ມີທ່າແຮງສູງ. ການສົ່ງເສີມທີ່ຮຽກຮ້ອງໃຫ້ມີການປັບປຸງວັດຖຸອຸປະກອນການສ້າງຄູ ເພື່ອກະກຽມຄູໃນສະຖາບັນສ້າງຄູ ສຳລັບການສຶກສາຮຽນຮ່ວມຈະຖືວ່າມີປະສິດທິພາບ ຖ້າວ່າ:

- ຜູ້ທີ່ຮັບຜິດຊອບສຳລັບ ການວາງແຜນ ແລະ ການສະໜອງງົບປະມານ ສຳລັບວັດຖຸອຸປະກອນການສ້າງຄູ ເພີ່ມການສະໜອງວັດຖຸອຸປະກອນ (ທີ່ມີຄຸນນະພາບດີ) ທີ່ເນັ້ນໜັກໃສ່ ການສຶກສາຮຽນຮ່ວມຮ່ວມ ສຳລັບນຳໃຊ້ໃນການສ້າງຄູ.
- ບັນດາຜູ້ສ້າງວັດຖຸອຸປະກອນນັ້ນທົບທວນເນື້ອໃນຂອງວັດຖຸອຸປະກອນ ເຊິ່ງສິ່ງຜົນເຮັດໃຫ້ອັດຕາສ່ວນຂອງວັດຖຸອຸປະກອນການສ້າງຄູທີ່ຖ່າຍທອດທັດສະນະຂອງການສຶກສາຮຽນຮ່ວມຢ່າງລະອຽດນັ້ນມີຫຼາຍຂຶ້ນກວ່າເກົ່າ, ພ້ອມທັງບໍ່ຈຳກັດຢູ່ພຽງແຕ່ການຕີຄວາມໝາຍ ກ່ຽວກັບຄວາມຕ້ອງການພິເສດ ຫຼື ຄວາມພິການເທົ່ານັ້ນ.
- ສ້າງ ແລະ ຈັດພິມວັດຖຸອຸປະກອນການສ້າງຄູ ທີ່ກ່ຽວກັບການສຶກສາຮຽນຮ່ວມທີ່ມີຄຸນນະພາບສູງໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າຢູ່ໃນທ້ອງຖິ່ນ/ພາກພື້ນ ເຊິ່ງສິ່ງດັ່ງກ່າວນີ້ອາດສົ່ງຜົນໃຫ້ຄູໃນ

ສະຖາບັນສ້າງຄູ ແລະ ນັກຮຽນຄູ ສາມາດເຂົ້າເຖິງວັດຖຸອຸປະກອນທີ່ສອດຄ່ອງກັບສະພາບການໄດ້ຫຼາຍກວ່າເກົ່າ.

- ທົບທວນນະໂຍບາຍການສຶກສາ ຖ້າມີຄວາມຈຳເປັນເຊິ່ງຈະສົ່ງຜົນໃຫ້ຄູໃນສະຖາບັນສ້າງຄູມີອິດສະລະ ແລະ ໄດ້ຮັບການສະໜັບສະໜູນຫຼາຍຂຶ້ນກວ່າເກົ່າ ເພື່ອພັດທະນາທັກສະເພື່ອຊອກຫາ ແລະ ເພື່ອສ້າງວັດຖຸອຸປະກອນຂອງພວກເຂົາເຈົ້າເອງ ແລະ ເພື່ອປັບປຸງວັດຖຸອຸປະກອນທີ່ມີຢູ່ແລ້ວ.
- ກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນສ້າງຄູ່ມີແນະນຳພາກປະຕິບັດ ສຳລັບຄູໃນສະຖາບັນສ້າງຄູ ເຊິ່ງສົ່ງຜົນເຮັດໃຫ້ການນຳໃຊ້ ແລະ ການປັບວັດຖຸອຸປະກອນທ້ອງຖິ່ນ/ບໍ່ແມ່ນທ້ອງຖິ່ນ ມີປະສິດທິພາບ ແລະ ສາມາດປັບປ່ຽນໄດ້ຫຼາຍກວ່າເກົ່າພາຍໃນສະພາບແວດລ້ອມຂອງພວກເຂົາເຈົ້າເອງ.
- ວັດຖຸອຸປະກອນການສ້າງຄູໄດ້ຮັບການທົບທວນຄືນໃໝ່ ເພື່ອເນັ້ນໜັກໃຫ້ເຫັນວ່າອັດຕາສ່ວນຂອງເນື້ອໃນພາກປະຕິບັດ ກ່ຽວກັບການສຶກສາຮຽນຮ່ວມນັ້ນໄດ້ເພີ່ມຂຶ້ນ ເຊິ່ງສົ່ງຜົນໃຫ້ນັກຮຽນຄູໄດ້ຮັບຄວາມເຂົ້າໃຈຫຼາຍຂຶ້ນກວ່າເກົ່າ ກ່ຽວກັບ ວິທີການຫັນປ່ຽນທິດສະດີຂອງການສຶກສາຮຽນຮ່ວມລົງສູ່ຕົວຈິງ.
- ຕົວຢ່າງ ແລະ ກໍລະນີສຶກສາຈຳນວນຫຼາຍ ກ່ຽວກັບ ການປະຕິບັດໃນການສຶກສາຮຽນຮ່ວມໄດ້ກຳນົດຂຶ້ນມາ ແລະ ບັນທຶກໄວ້ໃນຂັ້ນທ້ອງຖິ່ນ (ໂດຍພາກສ່ວນຕ່າງໆ ທີ່ກ່ຽວຂ້ອງກັບການສຶກສາ) ແລະ ເຜີຍແຜ່ຜ່ານທາງວັດຖຸອຸປະກອນການສ້າງຄູ ເຊິ່ງມັນສົ່ງຜົນໃຫ້ນັກຮຽນຄູໄດ້ຮັບແນວຄວາມຄິດ ແລະ ມີຄວາມໝັ້ນໃຈ ຫຼາຍຂຶ້ນກວ່າເກົ່າ ໃນການຈັດຕັ້ງປະຕິບັດການສຶກສາຮຽນຮ່ວມໃນພາກປະຕິບັດ.
- ແຜນງານພັດທະນາວິຊາຊີບໄດ້ສ້າງຂຶ້ນຫຼືໄດ້ຮັບການປັບປຸງໃໝ່ເຊິ່ງສົ່ງຜົນເຮັດໃຫ້ມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈຫຼາຍຂຶ້ນກວ່າເກົ່າ ກ່ຽວກັບການມີສ່ວນຮ່ວມ, ຄວາມຫຼາກຫຼາຍ ແລະ ການບໍ່ຈຳແນກໃນກຸ່ມຜູ້ທີ່ຮັບຜິດຊອບ ສຳລັບການສ້າງວັດຖຸອຸປະກອນການສ້າງຄູ.
- ກົນໄກຕ່າງໆໄດ້ຖືກສ້າງຂຶ້ນມາ, ຜ່ານກົນໄກດັ່ງກ່າວພາກສ່ວນຕ່າງໆທີ່ກ່ຽວຂ້ອງ (ເຊັ່ນວ່າຄູທີ່ມີປະສົບການ, ຜູ້ປົກຄອງ, ນັກຮຽນ, ຜູ້ຕາງໜ້າຈາກກຸ່ມຄົນທີ່ຫຼາກຫຼາຍ ໂດຍສະເພາະແມ່ນກຸ່ມຄົນທີ່ດ້ອຍໂອກາດຢູ່ໃນຊຸມຊົນ) ສະໜອງປັດໄຈນຳເຂົ້າໃຫ້ວັດຖຸອຸປະກອນການສ້າງຄູ ເຊິ່ງມັນສົ່ງຜົນໃຫ້ນັກຮຽນຄູ ສາມາດເຂົ້າເຖິງວັດຖຸອຸປະກອນທີ່ສະທ້ອນໃຫ້ເຫັນເຖິງຄວາມຫຼາກຫຼາຍໃນແວດລ້ອມຂອງພວກເຂົາເຈົ້າໄດ້ຢ່າງຖືກຕ້ອງຫຼາຍກວ່າເກົ່າ.
- ວັດຖຸອຸປະກອນການສ້າງຄູ ໃນຈຳນວນທີ່ເພີ່ມຂຶ້ນມານັ້ນແມ່ນໄດ້ຖືກຂຽນ ແລະ ທົບທວນໂດຍຜູ້ທີ່ມີປະສົບການ ຕົວຈິງໂດຍກົງ,ໃນການນຳໃຊ້ວິທີການຮຽນຮູ້ແບບຕັ້ງໜ້າ ແລະ ໃນການສິດສອນແບບເອົານັກຮຽນເປັນໃຈກາງ ແລະ ມີການຮຽນຮ່ວມ ເຊິ່ງສົ່ງຜົນໃຫ້ຄູໃນສະຖາບັນສ້າງຄູສາມາດນຳໃຊ້ວັດຖຸອຸປະກອນໃນລັກສະນະທີ່ມີນະວັດຕະກຳໃໝ່ໆຫຼາຍຂຶ້ນກວ່າເກົ່າ.
- ກົນໄກຕ່າງໆໄດ້ຖືກສ້າງຂຶ້ນມາພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນການສ້າງຄູ ເຊິ່ງຊ່ວຍໃນການທົບທວນ ແລະ ດັດແກ້ວັດຖຸອຸປະກອນການສ້າງຄູທັງໝົດ ເພື່ອກຳຈັດເນື້ອໃນທີ່ສະແດງເຖິງການຈຳແນກ ແລະ ເພື່ອກວມເອົາ ເນື້ອໃນທີ່ສົ່ງເສີມຄວາມສະເໝີພາບ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ເຊິ່ງມັນສົ່ງຜົນເຮັດໃຫ້ມີການສ້າງຂະບວນການທົບທວນວັດຖຸອຸປະກອນການສ້າງຄູຢ່າງຕໍ່ເນື່ອງ ແລະ ທ້າຍທີ່ສຸດແລ້ວ ວັດຖຸອຸປະກອນດັ່ງກ່າວນັ້ນກໍ່ມີລັກສະນະຮຽນຮ່ວມຫຼາຍຂຶ້ນກວ່າເກົ່າ.

- ວັດຖຸອຸປະກອນການສ້າງຄູໃນຈຳນວນທີ່ເພີ້ມຂຶ້ນມານັ້ນແມ່ນຖືກສ້າງຂຶ້ນມາເປັນພາສາຊົນເຜົ່າ ແລະ ຈັດພິມໃນຮູບແບບທີ່ມີຫຼາຍທາງເລືອກ ແລະ ສາມາດເຂົ້າເຖິງໄດ້ ເຊິ່ງສິ່ງຜົນໃຫ້ມີຄວາມສະເໝີພາບ ແລະ ມີການຮຽນຮ່ວມຫຼາຍຂຶ້ນກວ່າເກົ່າໃນກຸ່ມນັກຮຽນຄູ ຈາກກຸ່ມຄົນທີ່ໃຊ້ພາສາຊົນເຜົ່າ ແລະ ນັກຮຽນຄູທີ່ພິການແລະ ໃນນັກຮຽນຄູທັງໝົດ ເຊິ່ງມີປະສົບການໃນຫຼັກການຂອງການສຶກສາຮຽນຮວມ.

# ເອກະສານຊ້ອນທ້າຍ

ໃນຕາຕະລາງຂ້າງລຸ່ມນີ້, ໄດ້ແນະນຳເປົ້າໝາຍທີ່ອາດເປັນໄປໄດ້ ສຳລັບ ແຕ່ລະຂໍ້ຄວາມໃນການສົ່ງເສີມທີ່ໄດ້ກ່າວໄວ້ໃນ ບັນຫາທ້າທາຍຂ້າງເທິງນັ້ນ. ນອກນັ້ນ ກໍ່ຍັງມີບ່ອນຫວ່າງໄວ້ ສຳລັບເສີມແນວຄວາມຄິດຂອງທ່ານ ກ່ຽວກັບ ວິທີການສົ່ງເສີມ ແລະ ສື່ຕ່າງໆທີ່ທ່ານສາມາດນຳໃຊ້ ເພື່ອສົ່ງຂໍ້ຄວາມເຫຼົ່ານັ້ນໃນສະພາບການຂອງທ່ານ. ທ່ານຄວນສ້າງແນວຄວາມຄິດເຫຼົ່ານີ້ຜ່ານທາງຂະບວນການທີ່ມີການປຶກສາຫາລືກັບເພື່ອນຮ່ວມງານ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ. ຄຳແນະນຳເພີ່ມຕື່ມກ່ຽວກັບ ການສົ່ງເສີມ ແລະ ກ່ຽວກັບ ວິທີການ/ສື່ຕ່າງໆ ສາມາດເບິ່ງໄດ້ໃນ *ປື້ມຄູ່ມືເຫຼັ້ມທີ 1.*

| ຂໍ້ຄວາມຂອງການໂຄສະນາສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
| --- | --- | --- |
| *"ການສຶກສາຮຽນຮ່ວມຄວນໄດ້ຮັບການແກ້ໄຂໂດຍຜ່ານທາງວັດຖຸອຸປະກອນການສ້າງຄູແບບສະເພາະເຈາະຈົງ ແລະໂດຍການຝັງແໜ້ນປະເດັນນີ້ເຂົ້າໃນວັດຖຸອຸປະກອນການສ້າງຄູທັງໝົດ."* | • ພະນັກງານກະຊວງສຶກສາທີ່ຮັບຜິດຊອບການສຶກສາຄູ ແລະວັດຖຸອຸປະກອນການສ້າງຄູ<br>• ກົມກອງຕ່າງໆຂອງລັດຖະບານ ທີ່ຮັບຜິດຊອບການວາງແຜນງົບປະມານ ແລະການຈັດຊື້ວັດຖຸອຸປະກອນ<br>• ພະນັກງານໃນໂຮງຮຽນ/ສະຖາບັນສ້າງຄູ ທີ່ກ່ຽວຂ້ອງໃນການຄັດເລືອກ, ການຈັດຊື້, ການທົດລອງ ຫຼື ການຂຽນ/ການອອກແບບວັດຖຸອຸປະກອນ<br>• ນັກຮຽນຄູ ຜູ້ທີ່ສາມາດ ສະເໜີຂໍເຂົ້າເບິ່ງວັດຖຸອຸປະກອນຕ່າງໆ | ຈັດກອງປະຊຸມໃຫ້ແກ່ຜູ້ຮັບຜິດຊອບວັດຖຸອຸປະກອນການສ້າງຄູເພື່ອຮັບໃຊ້ການສຶກສາຮຽນຮ່ວມ |

| ຂໍ້ຄວາມຂອງການໂຄສະນາ ສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດ ເພື່ອສົ່ງຂໍ້ຄວາມນີ້ໃນ ສະພາບການຂອງ ທ່ານເອງ?* |
|---|---|---|
| *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງສ້າງຂຶ້ນໃນລະດັບປະເທດ/ ລະດັບພາກພື້ນ, ແລະ ປະກອບດ້ວຍຂໍ້ມູນ ແລະ ຕົວຢ່າງ ກ່ຽວກັບການສຶກສາຮຽນຮ່ວມ ທີ່ສອດຄ່ອງກັບສະພາບການ ແລະ ໃໝ່ຫຼ້າສຸດ. ວັດຖຸອຸປະກອນການສ້າງຄູທີ່ນຳເຂົ້າມານັ້ນຕ້ອງນຳໃຊ້ໃນລັກສະນະທີ່ສ້າງສັນ ແລະ ມີການວິເຄາະໃຈ້ແຍກ."* | • ພະນັກງານກະຊວງສຶກສາ ທີ່ຮັບຜິດຊອບ ການສຶກສາຄູ ແລະ ວັດຖຸອຸປະກອນການສ້າງຄູ<br>• ກົມກອງຕ່າງໆ ຂອງລັດຖະບານ ທີ່ຮັບຜິດຊອບ ການວາງແຜນງົບປະມານ ແລະ ການຈັດຊື້ ວັດຖຸອຸປະກອນ<br>• ພະນັກງານໃນໂຮງຮຽນ/ສະຖາບັນການສ້າງຄູ ທີ່ກ່ຽວຂ້ອງໃນ ການຄັດເລືອກ, ການຈັດຊື້, ການທົດລອງ ຫຼື ການຂຽນ/ການອອກແບບ ວັດຖຸອຸປະກອນ<br>• ພະນັກງານຜູ້ທີ່ຮັບຜິດຊອບການຝຶກອົບຮົມຄູ ໃນສະຖາບັນສ້າງຄູ (ເຊັ່ນ: ເພື່ອສະໜັບສະໜູນຄູໃນສະຖາບັນສ້າງຄູ ໃຫ້ນຳໃຊ້ວັດຖຸອຸປະກອນຢ່າງສ້າງສັນ ແລະ ຢ່າງວິເຄາະວິຈານ.<br>• ນັກຮຽນຄູ ຜູ້ທີ່ສາມາດ ສະເໜີຂໍ ເຂົ້າເບິ່ງ ວັດຖຸອຸປະກອນຕ່າງໆ | ອະທິບາຍ ແລະ ຊີ້ແຈງເຫດຜົນຕ່າງໆເພື່ອໃຫ້ຜູ້ຮັບຜິດຊອບງົບປະມານ ຈັດຊື້ວັດຖຸອຸປະກອນ ການສ້າງຄູທີ່ຮັບໃຊ້ການສຶກສາຮຽນຮ່ວມ ແລະ ຈັດໃຫ້ມີການຝຶກອົບຮົມ ກ່ຽວກັບການນຳໃຊ້ ວັດຖຸອຸປະກອນຮັບໃຊ້ ການສຶກສາຮຽນຮ່ວມ |
| *"ພະນັກງານທີ່ຮັບຜິດຊອບ ສຳລັບການຄັດເລືອກ ແລະ/ຫຼື ການສ້າງວັດຖຸອຸປະກອນການສ້າງຄູ ຕ້ອງການ ການພັດທະນາວິຊາຊີບແບບຕໍ່ເນື່ອງ, ແລະ ຕ້ອງແລກປ່ຽນປະສົບການພາຍໃນປະເທດ ແລະ ລະຫວ່າງປະເທດ. ທີມງານຜູ້ສ້າງວັດຖຸອຸປະກອນການສ້າງຄູ ຍັງຕ້ອງເປັນຕົວແທນທີ່ຫຼາກຫຼາຍຂອງປະເທດພວກເຂົາ."* | • ກະຊວງສຶກສາ ຫຼື ຜູ້ອຳນວຍການສະຖາບັນການສ້າງຄູ ທີ່ຮັບຜິດຊອບ ການຮັບສະໝັກ, ການຝຶກອົບຮົມ ແລະ ການຄຸ້ມຄອງ ບັນດາຜູ້ສ້າງວັດຖຸອຸປະກອນການສ້າງຄູ<br>• ຜູ້ສ້າງ/ຜູ້ຄັດເລືອກ ວັດຖຸອຸປະກອນການສ້າງຄູ<br>• ນັກຮຽນຄູ ຜູ້ທີ່ສາມາດສະເໜີຂໍເຂົ້າເບິ່ງ ວັດຖຸອຸປະກອນ ທີ່ກ່ຽວຂ້ອງກັບສະພາບການ<br>• ບັນດາຜູ້ຕາງໜ້າ ໃຫ້ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ທີ່ສາມາດມີສິດອອກສຽງ ໃນຂະບວນການສ້າງ/ຄັດເລືອກ ວັດຖຸອຸປະກອນການສ້າງຄູ | ຈັດໃຫ້ພະນັກງານ ທີ່ຮັບຜິດຊອບ ວັດຖຸອຸປະກອນການສ້າງຄູ ໄດ້ໄປຖອດຖອນແລະ ແລກປ່ຽນບົດຮຽນກັບ ບັນດາປະເທດອ້ອມຂ້າງ |

*ໃຫ້ຕື່ມ ແນວຄວາມຄິດຂອງທ່ານ ໂດຍອີງຕາມ ຄຳແນະນຳໃນ ປຶ້ມຄູ່ມືເຫຼັ້ມທີ 1

| ຂໍ້ຄວາມຂອງການໂຄສະນາສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງມີ ແລະ ກວມເອົາຫຼາຍຕົວຢ່າງຂອງການປະຕິບັດໃນຊີວິດຕົວຈິງ ໃນການສຶກສາຮຽນຮ່ວມ ໃນສະຖາບັນການສຶກສາຕ່າງໆ."* | • ພະນັກງານ ໃນກະຊວງສຶກສາ ແລະ/ຫຼື ສະຖາບັນສ້າງຄູ ຜູ້ທີ່ວາງແຜນ, ຂຽນ, ອອກແບບ ແລະ ທົບທວນວັດຖຸອຸປະກອນການສ້າງຄູ<br>• ພະນັກງານລັດ ຫຼື ພະນັກງານຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ ທີ່ຮັບຜິດຊອບ ການສະໜັບສະນູນບັນດາໂຄງການການສຶກສາຮຽນຮ່ວມ/ໂຮງຮຽນຮຽນຮ່ວມ ແລະ ຜູ້ທີ່ຢູ່ໃນຕຳແໜ່ງທີ່ສາມາດເຮັດໄດ້ຫຼາຍກວ່າເກົ່າ ເພື່ອສະໜັບສະໜູນ ການບັນທຶກ ແລະ ການແລກປ່ຽນປະສົບການເລົ່ານີ້<br>• ນັກຮຽນຄູ ຜູ້ທີ່ສາມາດ ສະເໜີຂໍເຂົ້າເບິ່ງວັດຖຸອຸປະກອນ ທີ່ກ່ຽວຂ້ອງກັບສະພາບການ ແລະ ອີງຕາມພາກປະຕິບັດ<br>• ຄູປະຈຳການ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບການສ້າງຄູ ເຊິ່ງສາມາດສະເໜີຂໍການຊ່ວຍເຫຼືອ ໃນການບັນທຶກປະສົບການຂອງພວກເຂົາ ເພື່ອນຳໃຊ້ໃນການປັບປຸງການສ້າງຄູ | ຈັດໃຫ້ມີກອງປະຊຸມຂອງຜູ້ອອກແບບ, ຂຽນ ແລະ ທົບທວນວັດຖຸອຸປະກອນການສ້າງຄູ |
| *"ພາກສ່ວນທີ່ກ່ຽວຂ້ອງຈຳເປັນຕ້ອງມີບົດບາດໜັກແໜ້ນກວ່າເກົ່າ ໃນການໃຫ້ຂໍ້ມູນ ແລະ ທົບທວນເນື້ອໃນທີ່ກ່ຽວຂ້ອງກັບການສຶກສາຮຽນຮ່ວມ ໃນວັດຖຸອຸປະກອນການສ້າງຄູ."* | • ພະນັກງານ ໃນກະຊວງສຶກສາ ແລະ/ຫຼື ສະຖາບັນການສ້າງຄູ ຜູ້ທີ່ວາງແຜນ, ຂຽນ, ອອກແບບ ແລະ ທົບທວນວັດຖຸອຸປະກອນການສ້າງຄູ<br>• ພະນັກງານລັດ ຫຼື ພະນັກງານຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ ທີ່ຮັບຜິດຊອບ ການສະໜັບສະນູນບັນດາໂຄງການການສຶກສາຮຽນຮ່ວມ/ໂຮງຮຽນຮຽນຮ່ວມ ແລະ ຜູ້ທີ່ຢູ່ໃນຕຳແໜ່ງທີ່ສາມາດ ອຳນວຍຄວາມສະດວກໃຫ້ພາກສ່ວນກ່ຽວຂ້ອງເຂົ້າຮ່ວມໃນຂັ້ນຕອນຂອງການສ້າງວັດຖຸອຸປະກອນການສ້າງຄູ<br>• ນັກຮຽນຄູ ຜູ້ທີ່ສາມາດ ສະເໜີຂໍເຂົ້າເບິ່ງວັດຖຸອຸປະກອນ ທີ່ສ້າງຂຶ້ນມາຈາກປັດໄຈນຳເຂົ້າ ທີ່ໄດ້ຮັບມາຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ | ຈັດໃຫ້ມີກອງປະຊຸມທົບທວນເນື້ອໃນ ແລະ ວັດຖຸອຸປະກອນຮັບໃຊ້ການສຶກສາຮຽນຮ່ວມໃນສະຖາບັນສ້າງຄູ |

*ໃຫ້ຕື່ມ ແນວຄວາມຄິດຂອງທ່ານ ໂດຍອີງຕາມ ຄຳແນະນຳໃນ ປື້ມຄູ່ມືເຫຼັ້ມທີ 1

| ຂໍ້ຄວາມຂອງການໂຄສະນາ ສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດ ເພື່ອສົ່ງຂໍ້ຄວາມນີ້ໃນ ສະພາບການຂອງ ທ່ານເອງ?* |
| --- | --- | --- |
| | • ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຜູ້ທີ່ສາມາດສະເໜີໃຫ້ເອົາທັກສະນະ ແລະ ປະສົບການ ຂອງພວກເຂົາ ກ່ຽວກັບການສຶກສາຮຽນຮ່ວມບັນຈຸ ແລະ ນຳໃຊ້ເຂົ້າໃນການສ້າງວັດຖຸອຸປະກອນ ການສ້າງຄູ | |
| *"ບັນດາຄູໃນສະຖາບັນ ສ້າງຄູ ຈຳເປັນຕ້ອງໄດ້ ຮັບອິດສະລະ ແລະ ທັກສະໃນການຄັດເລືອກ ປັບປຸງ ແລະ ນຳໃຊ້ ວັດຖຸອຸປະກອນການ ສ້າງຄູ ໃນລັກສະນະທີ່ ສາມາດປັບປຸງໄດ້."* | • ພະນັກງານ/ກົມກອງຕ່າງໆ ພາຍໃນກະຊວງ ສຶກສາຜູ້ທີ່ຮັບຜິດຊອບ ການຕັດສິນໃຈ ກ່ຽວກັບນະໂຍບາຍການສ້າງຄູ<br>• ຜູ້ອຳນວຍການສະຖາບັນສ້າງຄູ ຜູ້ທີ່ຮັບຜິດຊອບ ຈັດຕັ້ງປະຕິບັດນະໂຍບາຍການສ້າງຄູ<br>• ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູ ຜູ້ທີ່ສາມາດສະເໜີໃຫ້ມີການປ່ຽນແປງນະໂຍບາຍ ເພື່ອໃຫ້ມີການຜ່ອນສັ້ນຜ່ອນຍາວຫຼາຍ ກວ່າເກົ່າ ໃນການຄັດເລືອກ ແລະ ປັບປຸງ ວັດຖຸອຸປະກອນທີ່ພວກເຂົານຳໃຊ້ | ມີການແນະນຳ ແລະ ສົ່ງເສີມໃຫ້ຄູໃນສະຖາບັນ ສ້າງຄູ ສາມາດປັບປຸງ ແລະນຳໃຊ້ວັດຖຸອຸປະກອນ ການສ້າງຄູກ່ຽວກັບການ ສຶກສາຮຽນຮ່ວມ |
| *"ວັດຖຸອຸປະກອນສ້າງຄູ ຈຳເປັນຕ້ອງສະທ້ອນໃຫ້ ເຫັນເຖິງ ການປະຕິບັດ ແບບມີສ່ວນຮ່ວມ ເພື່ອ ຊ່ວຍບັນດາຄູໃນ ສະຖາບັນສ້າງຄູໃຫ້ສ້າງ ຕົວແບບຂອງການ ປະຕິບັດແບບມີສ່ວນຮ່ວມ ໃນການເຮັດວຽກຂອງ ພວກເຂົາກັບນັກຮຽນຄູ."* | • ພະນັກງານ ໃນກະຊວງສຶກສາ ແລະ/ ຫຼື ສະຖາບັນການສ້າງຄູ ຜູ້ທີ່ວາງແຜນ, ຂຽນ, ອອກແບບ ແລະ ທົບທວນ ວັດຖຸອຸປະກອນການສ້າງຄູ<br>• ພະນັກງານ ໃນກະຊວງສຶກສາ ແລະ/ ຫຼື ສະຖາບັນການສ້າງຄູ ຜູ້ທີ່ຮັບຜິດຊອບ ຈັດການພັດທະນາວິຊາຊີບຕໍ່ເນື່ອງ ໃຫ້ຄູໃນສະຖາບັນສ້າງຄູ (ເພື່ອວ່າພວກເຂົາ ຈະມີທັກສະ ແລະ ມີຄວາມພ້ອມ ທີ່ຈະ ປະຕິບັດວິທີການແບບມີສ່ວນຮ່ວມ ດັ່ງທີ່ໄດ້ອະທິບາຍໄວ້ໃນວັດຖຸອຸປະກອນສ້າງຄູ)<br>• ນັກຮຽນຄູ ຜູ້ທີ່ສາມາດຮຽກຮ້ອງຄູສອນໃນ ສະຖາບັນສ້າງຄູໃຫ້ພັດທະນາທັກສະໃໝ່ໆ ໂດຍອີງຕາມວິທີການປະຕິບັດແບບມີສ່ວນຮ່ວມ | ປຸກລະດົມໃຫ້ຄູໃນ ສະຖາບັນສ້າງຄູໄດ້ມີ ສ່ວນຮ່ວມໃນການສ້າງ ວັດຖຸອຸປະກອນການ ສ້າງຄູ |

*ໃຫ້ຕື່ມ ແນວຄວນຄິດຂອງທ່ານ ໂດຍອີງຕາມ ຄຳແນະນຳໃນ ປື້ມຄູ່ມືເຫຼັ້ມທີ 1

| ຂໍ້ຄວາມຂອງການໂຄສະນາສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງໃຫ້ຄົນທີ່ມີປະສົບການໂດຍກົງກ່ຽວກັບວິທີການຮຽນຮູ້ແບບຕັ້ງໜ້າເພື່ອວາງແຜນອອກແບບ ແລະ ທົບທວນວັດຖຸອຸປະກອນການສ້າງຄູດັ່ງກ່າວ."* | • ພະນັກງານໃນກະຊວງສຶກສາ ແລະ/ຫຼື ສະຖາບັນສ້າງຄູ ຜູ້ທີ່ຮັບຜິດຊອບການຮັບສະໝັກ ແລະ ສຶກສາອົບຮົມຜູ້ສ້າງວັດຖຸອຸປະກອນ<br>• ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູ ຜູ້ທີ່ສາມາດຮຽກຮ້ອງໃຫ້ວັດຖຸອຸປະກອນ ທີ່ພວກເຂົານຳໃຊ້ຢູ່ນັ້ນໄດ້ມີການເນັ້ນໜັກໃສ່ພາກປະຕິບັດເຊິ່ງສ້າງຂຶ້ນມາໂດຍ ຜູ້ດຳເນີນວຽກງານທີ່ມີປະສົບການ | ເຊີນຜູ້ມີປະສົບການກ່ຽວກັບການຜະລິດວັດຖຸອຸປະກອນການສ້າງຄູມາໃຫ້ຄຳແນະນຳເພີ່ມຕື່ມແກ່ຄູໃນສະຖາບັນສ້າງຄູ |
| *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງກວມເອົານັກຮຽນຄູໝົດທຸກຄົນ ແລະ ໃຫ້ນັກຮຽນຄູທຸກຄົນສາມາດເຂົ້າເຖິງໄດ້."* | • ພະນັກງານ ໃນກະຊວງສຶກສາ ແລະ/ຫຼື ສະຖາບັນສ້າງຄູ ຜູ້ທີ່ສ້າງວັດຖຸອຸປະກອນການສ້າງຄູ ແລະ ຜູ້ທີ່ຮັບຜິດຊອບການຮັບສະໝັກຜູ້ສ້າງວັດຖຸອຸປະກອນ<br>• ກົມກອງຕ່າງໆ ຂອງລັດຖະບານ ທີ່ຮັບຜິດຊອບການວາງແຜນງົບປະມານ ແລະ ການຈັດຊື້ວັດຖຸອຸປະກອນ<br>• ນັກຮຽນຄູ ຜູ້ທີ່ສາມາດສະເໜີຂໍວັດຖຸອຸປະກອນທີ່ເປັນພາສາຂອງພວກເຂົາ ແລະ ວັດຖຸອຸປະກອນໃນຮູບແບບທີ່ສາມາດເຂົ້າເຖິງໄດ້<br>• ອົງການຈັດຕັ້ງຂອງຄົນພິການ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ຜູ້ທີ່ສາມາດອອກສຽງເພີ່ມຕື່ມໃສ່ ການອອກສິດອອກສຽງຂອງນັກຮຽນຄູ ແລະ ໃຫ້ການຊ່ວຍເຫຼືອດ້ານວິຊາການ, ດ້ານການເງິນ ຫຼື ດ້ານການສົ່ງເສີມ | ປຸກລະດົມໃຫ້ນັກຮຽນຄູໃຫ້ມີສ່ວນຮ່ວມໃນການຜະລິດວັດຖຸອຸປະກອນການສ້າງຄູຮັບໃຊ້ການສຶກສາຮຽນຮ່ວມ |
| *"ວັດຖຸອຸປະກອນການສ້າງຄູຈຳເປັນຕ້ອງຖ່າຍທອດຂໍ້ຄວາມທີ່ບໍ່ມີການຈຳແນກແກ້ໄຂຮູບແບບທີ່ຕາຍໂຕ, ແລະ ສົ່ງເສີມນັກຮຽນຄູທຸກຄົນໃຫ້ຮູ້ສຶກວ່າພວກເຂົາມີຄຸນຄ່າ ແລະ ມີສ່ວນຮ່ວມ ໂດຍບໍ່ຈຳແນກຄວາມເປັນມາຂອງພວກເຂົາ."* | • ພະນັກງານ ໃນກະຊວງສຶກສາ ແລະ/ຫຼື ສະຖາບັນສ້າງຄູ ຜູ້ທີ່ສ້າງວັດຖຸອຸປະກອນການສ້າງຄູ ແລະ ຜູ້ທີ່ຮັບຜິດຊອບການຮັບສະໝັກຜູ້ສ້າງວັດຖຸອຸປະກອນ<br>• ນັກຮຽນຄູ ຜູ້ທີ່ສາມາດສະເໜີໃຫ້ ທົບທວນ ແລະ ປັບປຸງ ວັດຖຸອຸປະກອນ<br>• ພາກສ່ວນກ່ຽວຂ້ອງຕ່າງໆ ຈາກຫຼາກຫຼາຍກຸ່ມຄົນຜູ້ທີ່ສາມາດສະເໜີໃຫ້ ທົບທວນ ແລະ ປັບປຸງວັດຖຸອຸປະກອນ | ຈັດໃຫ້ມີການແນະນຳສົ່ງເສີມການມີສ່ວນຮ່ວມຂອງນັກຮຽນຄູໃນການປັບປຸງວັດຖຸ ອຸປະກອນ |

*ໃຫ້ຕື່ມ ແນວຄວນຄິດຂອງທ່ານ ໂດຍອີງຕາມ ຄຳແນະນຳໃນ ປື້ມຄູ່ມືເຫຼັ້ມທີ 1

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ ເປັນຊຸດປື້ມຄູ່ມືໃນຈຳນວນທັງໝົດ 5 ຫົວ




## ປື້ມຄູ່ມືຫົວທີ 1: ພາກສະເໜີ

ຢູ່ພາກສະເໜີນີ້ໄດ້ອະທິບາຍ ກ່ຽວກັບເນື້ອໃນຂອງບັນດາປື້ມຄູ່ມື ແລະ ປະຫວັດຄວາມເປັນມາຂອງປື້ມຄູ່ມືດັ່ງກ່າວ. ນອກນັ້ນ ຍັງໄດ້ນໍາສະເໜີ ກ່ຽວກັບການສຶກສາຮຽນຮ່ວມຂອງຄູ ແລະ ການແກ້ໄຂວຽກງານໂຄສະນາສົ່ງເສີມໃຫ້ມີປະສິດທິຜົນ, ໃຜທີ່ສາມາດເຮັດໄດ້ ແລະ ຈະເຮັດດ້ວຍວິທີໃດ. ພ້ອມກັນນັ້ນ ຢູ່ໃນພາກສະເໜີນີ້ ຍັງໄດ້ສະໜອງເນື້ອໃນສະຫຼຸບຫຍໍ້ ຂອງບັນດາປື້ມຄູ່ມື ກ່ຽວກັບນະໂຍບາຍ, ຫຼັກສູດ, ອຸປະກອນ ແລະ ວິທີການສິດສອນຕ່າງໆພ້ອມນໍາ.




## ປື້ມຄູ່ມືຫົວທີ 2: ນະໂຍບາຍ

ປື້ມຄູ່ມືຫົວນີ້ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກຕ່າງໆທີ່ມີຢູ່ໃນນະໂຍບາຍການສ້າງຄູ. ພ້ອມກັນນັ້ນ ກໍ່ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍການສຶກສາຮຽນຮ່ວມ.




## ປື້ມຄູ່ມືຫົວທີ 3: ຫຼັກສູດ

ປື້ມຄູ່ມືຫົວນີ້ ແມ່ນເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກຕ່າງໆທີ່ມີຢູ່ໃນຫຼັກສູດການສ້າງຄູກ່ອນປະຈໍາການ ແລະ ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະການຈັດຕັ້ງປະຕິບັດຫຼັກສູດໃນການສຶກສາຮຽນຮ່ວມ.




## ປື້ມຄູ່ມືຫົວທີ 4: ວັດຖຸອຸປະກອນ

ປື້ມຄູ່ມືຫົວນີ້ ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກທີ່ມີຢູ່ໃນອຸປະກອນການຮຽນ/ການສອນທີ່ນຳໃຊ້ໃນການສ້າງຄູ. ນອກນັ້ນ ກໍ່ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆ ທີ່ມີສ່ວນກ່ຽວຂ້ອງກັບ ການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດບັນດາວັດຖຸອຸປະກອນການຮຽນ/ການສອນ ສໍາລັບການສຶກສາຮຽນຮ່ວມ.




## ປື້ມຄູ່ມືຫົວທີ 5: ວິທີສິດສອນ

ປື້ມຄູ່ມືຫົວນີ້ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກທີ່ມີຢູ່ໃນວິທີສິດສອນທີ່ນໍາໃຊ້ຢູ່ບັນດາສະຖາບັນສ້າງຄູ. ພ້ອມນີ້ ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີ ສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາປູກລະດົມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດວິທີສິດສອນສໍາລັບການສຶກສາຮຽນຮ່ວມ.

**UNESCO Bangkok Office**
Asia and Pacific Regional Bureau for Education

Mom Luang Pin Malakul Centenary Building
920 Sukhumvit Road, Prakanong, Klongtoey
Bangkok 10110, Thailand
Email: appeal@unesco.org
Website: www.unesco.org/bangkok
Tel: +66-2-3910577 Fax: +66-2-3910866